ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບົດລາຍງານຜົນການດຳເນີນທຸລະກິດ6 ເດືອນຕົ້ນປີ

30 ມິຖຸນາ 2018



ຖະໜົນມິດຕະພາບລາວ-ໄທ; ບ້ານທົ່ງກາງ; ເມືອງສີສັດຕະນາກ; ນະຄອນຫລວງວຽງຈັນ; ສປປ ລາວ

ຕູ້ ປ.ນ: 2392; ໂທລະສັບ: (856 21) 316 142;

ໂທລະສານ: (856 21) 316 141 Email: edlgenhq@edlgen.com.la; website: www.edlgen.com.la

ສາລະບານ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.....2

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ: 3

3. ກົງຈັກການຈັດຕັ້ງ. 5

3.1 ໂຄງຮ່າງການຈັດຕັ້ງ.....5

4. ຄະນະກຳມະການຕ່າງໆ.....8

4.1 ຄະນະກຳມະການຂອງສະພາບໍລິຫານ. 8

1. ຄະນະກຳມະການກວດສອບ..... 8

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ.....8

3. ຄະນະກຳມະການກຳນົດຄ່າຕອບແທນ.....8

4. ຄະນະກຳມະການຄັດເລືອກ.....8

5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ.....9

4.2. ຄະນະກຳມະການຂອງ ຄະນະອຳນວຍການໃຫຍ່ 9

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ 9

2. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ (ຄຈຊ).....9

3. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ (ຄນຍວ).....9

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ.....10

5.1 ການຜະລິດ.....10

5.2 ລາຍຮັບ. 10

5.3 ລາຍຈ່າຍ. 10

5.4 ກຳໄລໃນການດຳເນີນທຸລະກິດ 10

5.5 ການມອບພັນທະ 11

ເອກະສານລາຍງານການເງິນ

1. ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນ ໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດ ໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດມາໃຫ້ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລີກ, ເຂື່ອນໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2, ເຂື່ອນໄຟຟ້າແຊລະບໍ ແລະ ເຂື່ອນໄຟຟ້ານ້ຳຊອງ, ລວມມີກຳລັງຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະ ພະນັກງານສຳນັກງານໃຫຍ່ ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດ ໄດ້ຕົກລົງໃຫ້ມີການເພີ້ມທຶນດ້ວຍການອອກຮຸ້ນຄັ້ງທຳອິດ (IPO) ດ້ວຍຈຳນວນຮຸ້ນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, ໃນວັນທີ 07 ມັງກອນ 2011 ບໍລິສັດໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນ ຕະຫລາດຫລັກຊັບ ລາວ ເພື່ອຈຳໜ່າຍຮຸ້ນໃນຕະຫລາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ຊັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອີກ 25% ແມ່ນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ໃນກາງ ປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນ ແບບສະເໜີຂາຍໃຫ້ຜູ້ຖືຮຸ້ນ ແລະ ແບບສະເໜີຂາຍຕໍ່ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ ຊຶ່ງ ປະກອບມີ:ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2 (25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດສ່ວນການຖືຮຸ້ນ) ເຮັດ ໃຫ້ກຳລັງຕິດຕັ້ງທັງໝົດຂອງ ຜ-ຟຟລ ມີຕົວເລກຢູ່ 881 MW. ດັ່ງນັ້ນໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດ ທະບຽນເປັນເງິນ 4.904.867.060.000 ກີບ ແລະມີຮຸ້ນທັງໝົດ 1.226.216.765 ຮຸ້ນ ຊັດສ່ວນການຖືຮຸ້ນ ຍັງຮັກສາເໝືອນເດີມ.

ໃນເດືອນ ຕຸລາ 2014, ຜ-ຟຟລ ໄດ້ກາຍເປັນ ບໍລິສັດມະຫາຊົນທຳອິດ ໃນ ສປປ ລາວ ທີ່ໄດ້ຮັບການ ຈັດລຳດັບຄວາມໜ້າເຊື່ອຖື ໂດຍ ບໍລິສັດ TRIS Rating ຈຳກັດ ໃນລະດັບ BBB+, ເຊິ່ງຈັດຢູ່ໃນກຸ່ມ Investment Grade ຫຼື ໃນກຸ່ມລະດັບຄວາມສ່ຽງທີ່ເໝາະສົມ ແລະ ລົງທຶນໄດ້.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານບາດ. ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມ ຈຳນວນ 392 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການ ລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອີກ 5 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດ ວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນ ຂອງ ເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມ ຊັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ້ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນ ເດືອນ ກັນຍາ 2015 ຜ-ຟຟລ ໄດ້ອອກ ຮຸ້ນເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນ ການຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດ ເພີ່ມຕື່ມຈຳນວນ 386,2 MW, ໃນນັ້ນມີ ໂຄງການຜະລິດໄຟຟ້າທີ່ ຈະຮັບໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນ ຂອງ ຟຟລ ໃນບັນດາ ໂຄງການ IPP ຈຳນວນ 6 ໂຄງການ ລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ທຶນຈົດ

ທະບຽນເປັນເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ ຊັດສ່ວນການຖືຮຸ້ນ ຍັງຮັກສາເໝືອນເດີມ.

ໃນວັນທີ 24 ທັນວາ ປີ 2015, ຜ-ຟຟລ ໄດ້ຮັບໂອນ ເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາ ກຳລັງຕິດຕັ້ງ 14 MW ເຮັດ ໃຫ້ມີກຳລັງຕິດຕັ້ງທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 2 ກັນຍາ 2016, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາສະຫາລັດທີ່ປະເທດໄທ ທຶນຈຳນວນດັ່ງກ່າວນີ້ ແມ່ນຈະຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບຳພາກຂະຫຍາຍ, ໂຄງການເຊເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກ ເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະ ໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

2. ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ, ກໍ່ສ້າງລະບົບສາຍສົ່ງ ແລະ ສະຖານີໄຟຟ້າຖ້າ ຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນ ແຜນໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫລື ບາງສ່ວນແທນ ຟຟລ ໃນບັນດາໂຄງການຜູ້ ຜະລິດໄຟຟ້າເອກະລາດ (Independent Power Producer: IPP);
3. ຮັບໝ້ຳບໍລິການ ການເດີນເຄື່ອງ ແລະ ບຳລຸງຮັກສາ (Operation& Maintenance Service) ໃຫ້ແກ່ ບັນດາໂຄງການຜະລິດໄຟຟ້າຕ່າງໆ ໃນຂອບເຂດທົ່ວປະເທດ.

❖ ວິໄສທັດ

1. ເປັນບໍລິສັດນຳໜ້າອັນດັບໜຶ່ງຂອງ ສປປ ລາວ ໃນການຮັບປະກັນ ແລະ ການຕອບສະໜອງພະລັງງານ ໄຟຟ້າຢ່າງພຽງພໍ ແລະ ທັນການ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

2. ເປັນບໍລິສັດທີ່ຈະປະກອບສ່ວນຢ່າງແຂງແຮງ ສ້າງໃຫ້ ສປປ ລາວ ກາຍເປັນຫມໍ້ໄຟ ຂອງອາຊຽນ ແລະ ປະກອບ ສ່ວນຢ່າງເຕັມກຳລັງເຮັດໃຫ້ ຂົງເຂດອາຊຽນ ມີຄວາມຫມັ້ນຄົງທາງດ້ານພະລັງງານຢ່າງຍືນຍົງ.

3. ເປັນບໍລິສັດແນວໜ້າໃນການໃຫ້ການບໍລິການ O&M ໂຮງງານໄຟຟ້າ ພາຍໃນ ແລະ ຂົງເຂດອາຊຽນ.

4. ເປັນບໍລິສັດແນວໜ້າໃນການສ້າງມູນຄ່າເພີ່ມ ໃຫ້ແກ່ຜູ້ຖືຮຸ້ນຈາກການລົງທຶນ.

❖ ພາລະກິດ

1. ຢືນຄຽງຄູ່ ແລະ ສົມທົບຢ່າງສະຫນິດແຫນ້ນ ກັບ ລັດວິສາຫະກິດໄຟຟ້າລາວ ໃນການສະໜອງພະລັງງານໄຟຟ້າຢ່າງໝັ້ນຄົງ ດ້ານປະລິມານ ແລະ ຄຸນນະພາບ ເພື່ອສະຫນອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມໃນທົ່ວປະເທດ ແລະ ໃນຂົງເຂດອາຊຽນ ດ້ວຍລາຄາທີ່ສົມເຫດສົມຜົນ ແລະ ສ້າງມູນຄ່າໃຫ້ແກ່ຜູ້ຖືຮຸ້ນ.

2. ສະໜອງພະລັງໄຟຟ້າຈາກພະລັງງານທົດແທນທີ່ສະອາດ ເພື່ອສ້າງຄວາມໝັ້ນຄົງ ແລະ ຍືນຍົງທາງດ້ານພະລັງງານ.

3. ລົງທຶນໃນຂະແໜງທຸລະກິດຕ່າງໆ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜູ້ຖືຮຸ້ນໂດຍນຳໃຊ້ທຶນ ແລະ ຊັບສິນຂອງ ບໍລິສັດກໍ່ຄື ຊັບສິນຂອງຜູ້ຖືຮຸ້ນ.

4. ຮັບຜິດຊອບຕໍ່ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນໄດ້ ສ່ວນເສຍ ຢ່າງເຕັມສ່ວນໃນການປົກປັກຮັກສາຊັບສິນ ຂອງຜູ້ຖືຮຸ້ນ ໃຫ້ມີຄວາມຫມັ້ນຄົງ.

5. ຕັ້ງຫນ້າສ້າງຄວາມຮັ່ງມີ ແລະ ມູນຄ່າໃນໄລຍະຍາວໃຫ້ແກ່ຜູ້ຖືຮຸ້ນ.

6. ປະຕິບັດຕາມ ວິໄສທັດ ແລະ ພາລະກິດ ທີ່ໄດ້ຮັບມອບຫມາຍ ຢ່າງຄ່ອງແຄ້ວ ແລະ ມີຫລັກການ ໂດຍຄຳນຶງເຖິງ ບັນດາຄວາມສ່ຽງຕ່າງໆ ໃນປັດຈຸບັນ ແລະ ອະນາຄົດ.

7. ມີຂະບວນການຕັດສິນໃຈ ແລະ ຂັ້ນຕອນການດຳເນີນງານທີ່ ຈະແຈ້ງໂປ່ງໃສ ແລະ ກວດສອບໄດ້.

8. ປະຕິບັດຕໍ່ທຸກຝ່າຍທີ່ກ່ຽວຂ້ອງ ຢ່າງສະເຫມີພາບເທົ່າທຽມກັນ ແລະ ຫຼີກເວັ້ນສະພາບທີ່ຈະກໍ່ໃຫ້ເກີດມີຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ ຫລື ຜົນປະໂຫຍດຊ້ຳຊ້ອນ.

9. ນຳໃຊ້ ຫົວຄິດປະດິດສ້າງ ແລະ ເຕັກນິກວິທະຍາການ ທີ່ກ້າວຫນ້າແນໃສ່ຍົກສູງປະສິດທິພາບໃນການບໍລິຫານທຸລະກິດ ແລະ ການຜະລິດ ຢ່າງຕໍ່ເນື່ອງ ແລະ ໃຫ້ສາມາດແຂ່ງຂັນໄດ້.

10. ຕັ້ງຫນ້າຍົກສູງ ແລະ ພັດທະນາ ຄຸນສົມບັດ ແລະ ຄວາມສາມາດ ຂອງພະນັກງານ ຂອງບໍລິສັດໃນທຸກລະດັບ ໃຫ້ມີຄວາມກ້າວຫນ້າ ແລະ ມີສ່ວນຮ່ວມໃນການຂະຫຍາຍ ແລະ ພັດທະນາບໍລິສັດ ດ້ວຍຄວາມຮູ້ສຶກທີ່ພາກພູມໃຈມີຄວາມຮັບຜິດຊອບ ແລະ ເປັນເຈົ້າຂອງ ແນໃສ່ພັດທະນາພະນັກງານຂອງບໍລິສັດໃນດ້ານການໃຫ້ບໍລິການ O&M ໃຫ້ໂຮງງານໄຟຟ້າທັງພາຍໃນ-ຂົງເຂດອາຊຽນຢ່າງຕໍ່ເນື່ອງ ແລະໃຫ້ສາມາດແຂ່ງຂັນໄດ້.


11. ເອົາໃຈໃສ່ ຕໍ່ສັງຄົມ, ແຫລ່ງນ້ຳ ແລະ ສິ່ງແວດລ້ອມ.

3. ภ ิ ารกิจการจัดตั้ง

3.1 โครงสร้างการจัดตั้ง

โครงสร้างการจัดตั้ง ผ-ฟฟล ประกอบด้วยสะพาบริหาร 09 ท่าน (ในนี้ผู้อำนวยการอิดสะหละ 3 ท่าน) ละนะผู้อำนวยการใหย่ 4 ท่าน, ผู้ช่วยผู้อำนวยการใหย่ 2 ท่าน, มี 5 ฝ่าย, 15 พะแนกและ 10 เฮื่อน.

โครงสร้างการจัดตั้ง บริษัท ผะลิต - ไฟฟ้าลาว มะหาชน



❖ **จำนอนพิน**

จำนอนพิน ของ ผ-ฟฟล มีทังหมิด 912 คิน, ยิง 178 คิน; ในนี้ พะนักงานถาออน 633 คิน, ยิง 106 คิน, พะนักงานสันยาจ้าง 279 คิน, ยิง 72 คิน.

ลายละอยด	พะนักงานถาออน					พะนักงานสันยาจ้าง				
สำนักงานใหย่	93	คิน,	ยิง	35	คิน	23	คิน,	ยิง	13	คิน
เฮื่อนไฟฟ้าน้ำงึ่ม 1	147	คิน,	ยิง	29	คิน	63	คิน,	ยิง	20	คิน
เฮื่อนไฟฟ้าน้ำถาน 2-3	52	คิน,	ยิง	4	คิน	23	คิน,	ยิง	7	คิน
เฮื่อนไฟฟ้าเซเสัด 1-2	82	คิน,	ยิง	15	คิน	57	คิน,	ยิง	8	คิน
เฮื่อนไฟฟ้าห้วยลำพันใหย่	39	คิน,	ยิง	1	คิน	22	คิน,	ยิง	4	คิน
เฮื่อนไฟฟ้าน้ำเลิก	49	คิน,	ยิง	4	คิน	25	คิน,	ยิง	5	คิน
เฮื่อนไฟฟ้าน้ำมัง 3	49	คิน,	ยิง	7	คิน	10	คิน,	ยิง	3	คิน
เฮื่อนไฟฟ้าเซเสัด 3	24	คิน,	ยิง	3	คิน	13	คิน,	ยิง	4	คิน
เฮื่อนไฟฟ้าน้ำสะนา	21	คิน,	ยิง	1	คิน	12	คิน,	ยิง	2	คิน
เฮื่อนไฟฟ้าน้ำซอง	21	คิน,	ยิง	1	คิน	10	คิน,	ยิง	2	คิน
เฮื่อนไฟฟ้าเซละบ้า	37	คิน,	ยิง	4	คิน	18	คิน,	ยิง	4	คิน
เฮื่อนไฟฟ้าตาดสะแลน	0	คิน,	ยิง	0	คิน	3	คิน,	ยิง	0	คิน
พะนักงานที่เธ้ดองกาปู่ IPP และ บริสัดลูก	13	คิน,	ยิง	2	คิน	0	คิน,	ยิง	0	คิน
พะนักงานประจำโครงการ O&M เซปจน-เซน้ำน้อย	6	คิน,	ยิง	0	คิน	0	คิน,	ยิง	0	คิน
ลอมทังหมิด	633	คิน,	ยิง	106	คิน	279	คิน,	ยิง	72	คิน

* **หมายเหด :** ผ-ฟฟล ได้สิ่งพะนักงานไปรับเหมิาการเดินเคื่อง-การบำลุงธัาสา ยู่เฮื่อนไฟฟ้าน้ำถาน 3 เฮื่อนไฟฟ้าเซเสัด 3 & เฮื่อนไฟฟ้าตาดสะแลน

ຄະນະສະພາບໍລິຫານ
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ປອ. ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ



ທ່ານ ບຸນອຸ້ມ ສີວັນເພັ້ງ
ຮອງປະທານສະພາບໍລິຫານ



ທ່ານ ນ. ລັດຕະນາ ປະທຸມວັນ
ກຳມະການ



ທ່ານ ບຸນມາ ມະນີວົງ
ກຳມະການ



ທ່ານ ນ. ວານິດາ ສະຫວັດດີ
ກຳມະການ



ທ່ານ ສີຈາດ ບຸດຊາກິດຕິລາດ
ກຳມະການ



ຮສ.ປອ. ກອງສີ ແສງມະນີ
ກຳມະການອິດສະຫລະ



ສຈ.ປອ. ຄຳລືຊາ ນອນສະຫວັນ
ກຳມະການອິດສະຫລະ



ຮສ. ຄຳເພີ ພົມມະຈັນ
ກຳມະການອິດສະຫລະ

ຄະນະຜູ້ອຳນວຍການໃຫຍ່
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ນ. ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່



ທ່ານ ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່
ສາຍງານພັດທະນາທຸລະກິດ



ທ່ານ ປອ. ບຸນສະຫລອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່
ສາຍງານການເງິນ



ທ່ານ ພູມມີ ເນຕິບັນດິດ
ຮອງຜູ້ອຳນວຍການໃຫຍ່
ສາຍງານຜະລິດ



ທ່ານ ວິຣະຖາ ພອນແກ້ວ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍພັດທະນາທຸລະກິດ



ທ່ານ ນ. ສຸກສັນ ພິງພິລາ
ຜູ້ຊ່ວຍ ຜູ້ອຳນວຍການໃຫຍ່
ຜູ້ອຳນວຍການ ຝ່າຍແຜນການ

4. ຄະນະກຳມະການຕ່າງໆ.

ເພື່ອເຮັດໃຫ້ວຽກງານຂອງບໍລິສັດ ມີຄວາມຮັບປະກັນທາງດ້ານຄຸນນະພາບ ແລະ ມີລະບຽບແບບແຜນ ຕາມກົດໝາຍກົດລະບຽບ ທີ່ກ່ຽວຂ້ອງ; ສະພາບໍລິຫານ ຜ-ຟຟລ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆຂຶ້ນ ປະກອບມີ ຄະນະກຳມະການ ຂອງ ສະພາບໍລິຫານ ແລະ ຄະນະກຳມະການ ຂອງ ຄະນະອຳນວຍການໃຫຍ່ ເພື່ອຄົ້ນຄວ້າພິຈາລະນາວຽກງານ, ລະອຽດດັ່ງລຸ່ມນີ້:

4.1. ຄະນະກຳມະການຂອງສະພາບໍລິຫານ

1. ຄະນະກຳມະການກວດສອບ

ໃນການດຳເນີນງານ 6 ເດືອນຕົ້ນປີ 2018 ຄະນະກຳມະການກວດສອບ ໄດ້ຈັດກອງປະຊຸມທັງໝົດ 4 ຄັ້ງຄື: ປະຊຸມວິສາມັນ 2 ຄັ້ງ ແລະ ປະຊຸມສາມັນ 2 ຄັ້ງ, ດັ່ງນີ້:

- ກອງປະຊຸມວິສາມັນຄັ້ງທີ່ I ໄດ້ຈັດຂຶ້ນໃນວັນທີ 19 ກຸມພາ 2018. ໄດ້ປຶກສາຫາລືກ່ຽວກັບຜົນການ ກວດສອບເຂື່ອນໄຟຟ້ານ້ຳງື່ມ1, ເຂື່ອນນ້ຳມັງ 3 ແລະ ສຳນັກງານໃຫຍ່, ແຜນປະຊຸມຂອງ ຄະນະ ກຳມະການກວດສອບ ແລະ ແຜນອອກວຽກສະໜາມຂອງພະແນກກວດສອບພາຍໃນ.
- ກອງປະຊຸມສາມັນ ຄັ້ງທີ I ໄດ້ຈັດຂຶ້ນໃນວັນທີ 07 ມີນາ 2018 ໄດ້ປຶກສາຫາລືກ່ຽວກັບບົດລາຍງານງົບ ການເງິນຂອງ ຜ-ຟຟລ ປະຈຳປີ 2017, ຊຶ່ງໄດ້ຜ່ານນັກກວດສອບບັນຊີພາຍນອກ (KPMG).
- ກອງປະຊຸມສາມັນ ຄັ້ງທີ II ໄດ້ຈັດຂຶ້ນໃນວັນທີ 09 ພຶດສະພາ 2018 ໄດ້ປຶກສາຫາລືກ່ຽວ ກັບບົດລາຍ ງານການເງິນ ຂອງ ຜ-ຟຟລ ປະຈຳໄຕມາດ 1 ປີ 2018.
- ກອງປະຊຸມວິສາມັນຄັ້ງທີ II ໄດ້ຈັດຂຶ້ນໃນວັນທີ 13 ມິຖຸນາ 2018 ເພື່ອປຶກສາຫາລືກຽວກັບ ພາລະ ບົດບາດຂອງຄະນະກຳມະການ ແລະ ທົບທວນຜົນກວດສອບທີ່ເຂື່ອນໄຟຟ້ານ້ຳສະນາ.

2. ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ໃນການດຳເນີນງານ 6 ເດືອນຕົ້ນປີ 2018 ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ເປີດກອງປະຊຸມຂຶ້ນ 1 ຄັ້ງ:

- ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 05/02/2018, ເຊິ່ງເນື້ອໃນກອງປະຊຸມແມ່ນເພື່ອຄົ້ນຄ້ວາ ແລະ ປຶກສາ ຫາລືກ່ຽວກັບຄວາມສ່ຽງທາງດ້ານການເງິນຂອງບໍລິສັດ ໂດຍສະເພາະແມ່ນຄວາມສ່ຽງຂອງການເກັບໜີ້ ຄ່າກະແສໄຟຟ້າບໍ່ໄດ້ຕາມແຜນການຂອງ ຜ-ຟຟລ, ຄວາມຕ້ອງການນຳໃຊ້ເງິນ 100 ລ້ານ USD ທີ່ຝາກ ຢູ່ທະນາຄານການຄ້າຕ່າງປະເທດລາວ, ການຊອກຫາແຫຼ່ງເງິນເພື່ອມານຳໃຊ້ໃນ ຜ-ຟຟລ ແລະ ອື່ນໆ.

3. ຄະນະກຳມະການກຳນົດຄ່າຕອບແທນ

ຄະນະກຳມະການ ກຳນົດຄ່າຕອບແທນ ໄດ້ຖືກແຕ່ງຕັ້ງຂຶ້ນໂດຍ ສະພາບໍລິຫານ ຜ-ຟຟລ ຕາມຂໍ້ຕົກລົງ ເລກທີ 0041/ຜ-ຟຟລ. ລົງວັນທີ: 06/01/2017, ປັດຈຸບັນແມ່ນຢູ່ໃນຂັ້ນຕອນກະກຽມການດຳເນີນງານຕາມ ພາລະບົດບາດ.

4. ຄະນະກຳມະການຄັດເລືອກ

ໃນການດຳເນີນງານ 6 ເດືອນຕົ້ນປີ 2018 ຄະນະກຳມະການຄັດເລືອກ ໄດ້ຈັດກອງປະຊຸມ 2 ຄັ້ງ: ໃນວັນທີ 13 ກຸມພາ 2018 ແລະ ຄັ້ງວັນທີ 13 ມີນາ 2018 ໃນກອງປະຊຸມໄດ້ພິຈາລະນາໃນຫຼາຍບັນຫາ ແລະ ໄດ້ເຫັນດີ ເອກະພາບກັນ ດັ່ງນີ້:

- ກອງປະຊຸມໄດ້ພິຈາລະນາຮັບຮອງເອົາພາລະບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຄະນະ ກຳມະການ ຄັດເລືອກສະພາບໍລິຫານ ຂອງ ຜ-ຟຟລ.
- ກອງປະຊຸມໄດ້ພິຈາລະນາຮັບຮອງເອົາລາຍຊື່ ສະມາຊິກສະພາບໍລິຫານ ຂອງ ຜ-ຟຟລ ຊຸດໃໝ່ ແທນ ສະມາຊິກສະພາບໍລິຫານ ຂອງ ຜ-ຟຟລ ຊຸດເກົ່າທີ່ຄົບອາຍຸການ.

- ກອງປະຊຸມໄດ້ພິຈາລະນາ ປ່ຽນການແຕ່ງຕັ້ງກອງເລຂາຄະນະກຳມະການຄັດເລືອກ ຈາກ ຝ່າຍແຜນການ ຕາມຂໍ້ຕົກລົງເລກທີ 0042/ຜ-ຟຟລ ລົງວັນທີ 06/01/2017 ມາເປັນ ຝ່າຍບໍລິຫານງານສະໜັບສະໜຸນ ອົງກອນ ເພື່ອໃຫ້ສອດຄ່ອງກັບພາລະບົດບາດ ແລະ ໜ້າທີ່ຕົວຈິງ.

5. ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ໃນການດຳເນີນງານ 6 ເດືອນຕົ້ນປີ 2018, ໂດຍອີງໃສ່ຂໍ້ມູນຜູ້ຖືຮຸ້ນຂອງ ແລະ ການດຳເນີນທຸລະກິດຂອງ ຜ-ຟຟລ ແມ່ນຍັງບໍ່ມີລາຍການທີ່ກ່ຽວພັນເກີດຂຶ້ນ ລະຫວ່າງ ບໍລິສັດກັບບຸກຄົນ ແລະ ນິຕິກຳບຸກຄົນທີ່ກ່ຽວພັນ ພ້ອມດຽວກັນນີ້ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ກໍ່ໄດ້ກະກຽມຈັດກອງປະຊຸມ ຂອງຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ທີ່ຄາດວ່າ ຈະຈັດຂຶ້ນໃນໄຕມາດ 3 ປີ 2018.

4.2 ຄະນະກຳມະການຂອງຄະນະອຳນວຍການໃຫຍ່.

1. ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້ຂາຍໄຟຟ້າ

ໃນການດຳເນີນງານ 6 ເດືອນຕົ້ນປີ 2018 ຄະນະກຳມະການເຈລະຈາສັນຍາສຳປະທານ, ສັນຍາຮ່ວມຮຸ້ນ ແລະ ສັນຍາຊື້-ຂາຍໄຟຟ້າໄດ້ດຳເນີນວຽກງານ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

- ສືບຕໍ່ເຈລະຈາສັນຍາສຳປະທານຂອງໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ຫ້ວຍລຳພັນໃຫຍ່ ລະຫວ່າງ ຜ-ຟຟລ ແລະ ກົມທຸລະກິດພະລັງງານ (ກະຊວງພະລັງງານ ແລະ ບໍ່ແຮ່).
- ສືບຕໍ່ເຈລະຈາສັນຍາສຳປະທານຂອງໂຄງການເຂື່ອນໄຟຟ້ານ້ຳຄານ 2 ແລະ ຫ້ວຍລຳພັນໃຫຍ່ ລະຫວ່າງ ຜ-ຟຟລ ແລະ ກົມແຜນການ ແລະ ການຮ່ວມມື (ກະຊວງພະລັງງານ ແລະ ບໍ່ແຮ່).
- ວັນທີ 26 ມີນາ 2018 ໄດ້ສຳເລັດການລົງນາມສັນຍາໂອນຮຸ້ນໂຄງການເຂື່ອນໄຟຟ້ານ້ຳແບ່ງ ລະຫວ່າງ ຟຟລ ແລະ ຜ-ຟຟລ.
- ວັນທີ 26 ມີນາ 2018 ໄດ້ສຳເລັດການລົງນາມສັນຍາໂອນຮຸ້ນໂຄງການເຂື່ອນໄຟຟ້ານ້ຳລອງ ລະຫວ່າງ ຟຟລ ແລະ ຜ-ຟຟລ.
- ວັນທີ 26 ມີນາ 2018 ໄດ້ສຳເລັດການລົງນາມສັນຍາໂອນຮຸ້ນໂຄງການເຂື່ອນໄຟຟ້າດອນສະໂຮງ ແລະ ໄຊຍະບູລີ ລະຫວ່າງ ຟຟລ ແລະ ຜ-ຟຟລ.

2. ຄະນະກຳມະການຈັດຊື້ ແລະ ສະໜອງວັດສະດຸອຸປະກອນ(ຄຈຊ).

ໃນການດຳເນີນງານ 6 ເດືອນຕົ້ນປີ 2018 ຄະນະກຳມະການ ຈັດຊື້ ຜ-ຟຟລ ໄດ້ເປີດກອງປະຊຸມປຶກສາຫາລືວຽກງານຈັດຊື້-ວ່າຈ້າງ ຈຳນວນ: 02ຄັ້ງ ແລະ ເປີດກອງປະຊຸມເຈລະຈາ-ປຶກສາຫາລື ກັບ ຜູ້ສະໜອງ/ຜູ້ຮັບເໝົາ ຈົນກ້າວໄປສູ່ການເຊັນສັນຍາ ຈຳນວນ 14 ໂຄງການ, ໂດຍແບ່ງອອກເປັນ 03 ພາກ ດັ່ງນີ້:

- ພາກ ການປະຕິບັດວຽກ (Works) ຈຳນວນ:05 ໂຄງການ
- ພາກ ຈັດຊື້ສິນຄ້າ (Goods) ຈຳນວນ:07 ໂຄງການ
- ພາກ ສະໜອງການບໍລິການ (Service) ຈຳນວນ:02 ໂຄງການ

3. ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ (ຄນຍວ).

ໃນການດຳເນີນງານ 6 ເດືອນຕົ້ນປີ 2018, ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ໄດ້ຈັດກອງປະຊຸມຂຶ້ນ ພ້ອມໄດ້ຄົ້ນຄ້ວາພິຈາລະນາຫຼາຍບັນຫາ ເພື່ອແກ້ໄຂວຽກງານການດຳເນີນທຸລະກິດພາຍໃນ ຜ-ຟຟລ ດັ່ງນີ້:

- ຂໍ້ກຳນົດ ຂອງ ຜ-ຟຟລ ວ່າດ້ວຍ ການໃຊ້ຈ່າຍໄປວຽກທາງການພາຍໃນປະເທດ (ສະບັບປັບປຸງ ຄັ້ງທີ 2).
- ຂໍ້ກຳນົດ ຂອງ ຜ-ຟຟລ ວ່າດ້ວຍ ນະໂຍບາຍຂອງຄະນະກຳມະການຄົ້ນຄວ້າລະບຽບການພາຍໃນຜ-ຟຟລ.
- ຂໍ້ກຳນົດ ຂອງ ຜ-ຟຟລ ວ່າດ້ວຍ ນະໂຍບາຍຂອງຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ.
- ຂໍ້ກຳນົດ ຂອງ ຜ-ຟຟລ ວ່າດ້ວຍ ການປະກອບນະໂຍບາຍໃຫ້ແກ່ມະນຸດກົບ.
- ປະກາດນຳໃຊ້ອັດຕາຄ່າແຮງງານຂັ້ນຕ່ຳ.

5. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານ

ນັບແຕ່ປີ 2010 ເຖິງປັດຈຸບັນ ຜ-ຟຟລ ໄດ້ດຳເນີນທຸລະກິດເປັນເວລາແປດປີແລ້ວ ໃນການຜະລິດກະແສໄຟຟ້າ ເພື່ອຂາຍຍົກໃຫ້ ຟຟລ, ໃນຂະນະດຽວກັນ ຜ-ຟຟລ ຕ້ອງໄດ້ປັບປຸງການຄຸ້ມຄອງບໍລິຫານພາຍໃນໃຫ້ສອດຄ່ອງກັບກົດລະບຽບ ແລະ ກົດໝາຍຕ່າງໆ ທີ່ກ່ຽວກັບບໍລິສັດມະຫາຊົນ ທີ່ຈົດທະບຽນໃນຕະຫລາດຫລັກຊັບລາວ ເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານຂອງ ຜ-ຟຟລ ແລະ ເພື່ອສ້າງພາບພົດ, ຄວາມໝັ້ນໃຈຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ. ດັ່ງນັ້ນ, ຜົນການດຳເນີນທຸລະກິດ 6 ເດືອນຕົ້ນປີ 2018 ຈຶ່ງສັງລວມໄດ້ດັ່ງນີ້:

5.1. ການຜະລິດ

ການດຳເນີນງານ 6 ເດືອນຕົ້ນປີ 2018 ຜ-ຟຟລ ມີເຂື່ອນທີ່ດຳເນີນການ ຜະລິດກະແສໄຟຟ້າທັງໝົດ 10 ເຂື່ອນ, ມີກຳລັງຕິດຕັ້ງ ທັງໝົດ 1.131 MW. ເນື່ອງຈາກທຳມະຊາດໄດ້ເອື້ອອຳນວຍໃນການຜະລິດກະແສໄຟຟ້າ, ເຮັດໃຫ້ການຜະລິດບັນລຸຕົວເລກ 1.073,26 GWh, ເທົ່າກັບ 104,08% ຂອງແຜນການ.

5.2. ລາຍຮັບ

ລາຍຮັບສ່ວນໃຫຍ່ ຂອງ ຜ-ຟຟລ ແມ່ນລາຍຮັບຈາກການຈຳໜ່າຍກະແສໄຟຟ້າໃຫ້ ຟຟລ, ຊຶ່ງລາຍຮັບໃນ 6 ເດືອນຕົ້ນປີ 2018 ນີ້, ຜ-ຟຟລ ສາມາດສ້າງລາຍຮັບໄດ້ 527.725 ລ້ານກີບ, ລົ່ນແຜນການ 9,35% ໃນນີ້ລາຍຮັບຈາກການຈຳໜ່າຍກະແສໄຟ 506.472 ລ້ານກີບ ເທົ່າກັບ 95,97% ຂອງ ລາຍຮັບທັງໝົດ ແລະ ລາຍຮັບອື່ນໆ 21.253 ລ້ານກີບ ເທົ່າກັບ 4,03% ຂອງ ລາຍຮັບທັງໝົດ.

5.3. ລາຍຈ່າຍ

ລາຍຈ່າຍໃນການດຳເນີນທຸລະກິດ ຂອງ ຜ-ຟຟລ ໃນ 6 ເດືອນຕົ້ນປີ 2018 ເປັນເງິນທັງໝົດ 701.012 ລ້ານກີບ ເທົ່າກັບ 132,84% ຂອງ ລາຍຮັບທັງໝົດ ເນື່ອງຈາກການເພີ່ມຂຶ້ນຂອງພາກລາຍຈ່າຍໃນການດຳເນີນງານ ແລະ ລາຍຈ່າຍຂາດທຶນອັດຕາແລກປ່ຽນ ໃນນີ້:

ລາຍຈ່າຍໃນການດຳເນີນທຸລະກິດໃນ 6 ເດືອນຕົ້ນປີ 2018			
ລ/ດ	ລາຍການລະອຽດ	ຈຳນວນ ລ້ານກີບ	(%) ທຽບໃສ່ລາຍຮັບທັງໝົດ
1	ຕົ້ນທຶນໃນການຂາຍ	225.967	42,82%
2	ລາຍຈ່າຍທາງການເງິນ	251.388	47,64%
3	ຂາດທຶນອັດຕາແລກປ່ຽນເງິນຕາຕ່າງປະເທດ	147.943	28,03%
4	ລາຍຈ່າຍໃນການດຳເນີນງານ	75.714	14,35%
	ລວມທັງໝົດ	701.012	132,84%

5.4. ກຳໄລໃນການດຳເນີນທຸລະກິດ.

ໃນ 6 ເດືອນຕົ້ນປີ 2018 ຈະມີກຳໄລຈາກ 2 ພາກຄື:

1. ກຳໄລສຸດທິ ຈາກການດຳເນີນທຸລະກິດຂອງ ຜ-ຟຟລ ທີ່ມີລາຍຮັບ ແລະ ລາຍຈ່າຍຂ້າງເທິງນີ້, ເຫັນວ່າ ຜ-ຟຟລ ຂາດຖຸນຢູ່ 173.286 ລ້ານກີບ.
2. ກຳໄລສຸດທິ ຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນເປັນເງິນທັງໝົດ 268.677 ລ້ານກີບ.

ລວມກຳໄລໃນ 6 ເດືອນຕົ້ນປີ 2018 ທັງໝົດ 95.391 ລ້ານກີບ.

5.5. ການມອບພັນທະ

ຜ-ຟຟລ ແມ່ນບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນບໍລິສັດໜຶ່ງ ທີ່ດຳເນີນທຸລະກິດ ພາຍໃຕ້ກົດໝາຍ ຂອງ ສປປລາວ; ດັ່ງນັ້ນ ການມອບພັນທະກໍ່ເປັນອີກວຽກໜຶ່ງ ທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ. ພັນທະທີ່ ຜ-ຟຟລ ມອບໃຫ້ລັດ, ປະກອບດ້ວຍ ອາກອນເງິນປັນຜົນ, ຄ່າພາກຫລວງ, ອາກອນເງິນເດືອນ-ເງິນບຳເນັດ-ເບ້ຍປະຊຸມ ແລະ ອາກອນມູນຄ່າເພີ່ມ ໃນ 6 ເດືອນຕົ້ນປີ 2018 ລວມມອບທັງໝົດ 28.074 ລ້ານກີບ ໃນນີ້ມີ:

ລຳດັບ	ລາຍການລະອຽດ	ຫົວໜ່ວຍ: ລ້ານກີບ
1	ອາກອນເງິນປັນຜົນ	20.531
2	ຄ່າພາກຫລວງ	2.857
3	ອາກອນເງິນເດືອນ-ເງິນບຳເນັດ-ເບ້ຍປະຊຸມ	2.693
4	ອາກອນມູນຄ່າເພີ່ມ	1.993
ລວມທັງໝົດ		28.074

ເອກະສານລາຍງານການເງິນ 6 ເດືອນຕົ້ນປີ
30 ມີຖຸນາ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ເອກະສານລາຍງານການເງິນການປີ ໂດຍຫຍໍ້
ສຳລັບຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2018
ແລະ
ບົດລາຍງານຂອງຜູ້ກວດສອບອິດສະລະ
ທົບທວນຄືນຂໍ້ມູນທາງດ້ານການເງິນການປີ ໂດຍຫຍໍ້

ເອກະສານລາຍງານການເງິນ ແລະ ບົດລາຍງານຂອງຜູ້ກວດສອບບັນຊີສະບັບນີ້ແມ່ນຖືກລາຍງານເປັນພາສາອັງກິດ. ສ່ວນສະບັບພາສາລາວ ແມ່ນເປັນ ພຽງສະບັບສົມທຽບເທົ່ານັ້ນ, ໃນກໍລະນີທີ່ບໍ່ສອດຄ່ອງ ແມ່ນຈະຍຶດຖືສະບັບພາສາອັງກິດເປັນຕົວຫຼັກ.

The Financial Statements and Independent Auditor's Report have been prepared in English. The Lao version is reference only; in case of discrepancies, the English version shall prevail.

KPMG Lao Co.,Ltd.
10th Floor, Royal Square Office Building,
Samsenthai Road, Nongduong Nua Village,
Sikhotabong District, P.O.Box 6978,
Vientiane, Lao PDR
Tel +856 (21) 454240-7

ບໍລິສັດ ເຄພີເອັມຈີລາວ ຈຳກັດ
ຊັ້ນ 10, ອາຄານ ໂຣໂຢລສະແຄລ
ຖະໜົນ ສາມແສນໄທ, ບ້ານ ໜອງດ້ວງເໜືອ,
ເມືອງ ສີໂຄດຕະບອງ, ຕູ້ ປ.ນ. 6978,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ : +856 (21) 454240-7

ບົດລາຍງານຂອງຜູ້ກວດສອບອິດສະລະ ທົບທວນຄືນຂໍ້ມູນທາງດ້ານການເງິນການປີໂດຍຫຍໍ້

ເຖິງ ສະພາຜູ້ບໍລິຫານ ຂອງບໍລິສັດ ພະລຶດ-ໄຟຟ້າລາວ ມະຫາຊົນ

ຄຳນຳ

ພວກຂ້າພະເຈົ້າໄດ້ທົບທວນຄືນ ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ ກິດຈະການການປີ ໂດຍຫຍໍ້ ຂອງບໍລິສັດລັດ ພະລຶດ-ໄຟຟ້າ ລາວ ມະຫາຊົນ ແລະ ບໍລິສັດລູກ ("ກຸ່ມບໍລິສັດ") ແລະ ບໍລິສັດລັດ ພະລຶດ-ໄຟຟ້າ ລາວ ມະຫາຊົນ ("ບໍລິສັດ"), ຕາມລຳດັບ, ໃນວັນທີ 30 ມິຖຸນາ 2018, ໃບລາຍງານຜົນໄດ້ຮັບແບບລວມ ແລະ ແບບແຍກກິດຈະການໂດຍຫຍໍ້, ໃບລາຍງານສ່ວນປ່ຽນແປງຂອງຜູ້ຖືຮຸ້ນ ແລະ ໃບລາຍງານກະແສເງິນສົດ ສຳລັບຫົກເດືອນຕົ້ນປີ ສິ້ນສຸດມື້ດຽວກັນ, ແລະ ບົດອະທິບາຍປະກອບຂໍ້ມູນທາງດ້ານການເງິນການປີ ("ຂໍ້ມູນທາງດ້ານການເງິນການປີໂດຍຫຍໍ້"). ຜູ້ບໍລິຫານເປັນຜູ້ຮັບຜິດຊອບ ສຳລັບການກະກຽມ ແລະ ນຳສະເໜີຂໍ້ມູນທາງດ້ານການເງິນການປີໂດຍຫຍໍ້ໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງກຸ່ມບໍລິສັດຕາມທີ່ໄດ້ກ່າວໄວ້ ໃນບົດອະທິບາຍທີ 2 ໃນຂໍ້ມູນທາງດ້ານການເງິນການປີໂດຍຫຍໍ້. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນສະແດງຂໍ້ສະຫຼຸບກ່ຽວກັບຂໍ້ມູນທາງດ້ານການເງິນການປີໂດຍຫຍໍ້ ບົນພື້ນຖານຜົນຂອງການທົບທວນຄືນຂອງພວກຂ້າພະເຈົ້າ.

ຂອບເຂດການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນທົບທວນຄືນສອດຄ່ອງກັບມາດຕະຖານ ການທົບທວນຄືນສາກົນລະຫັດ 2410 "*ການທົບທວນ ຄືນຂໍ້ມູນທາງການເງິນລະຫວ່າງການປີໂດຍຜູ້ກວດສອບອິດສະລະຂອງບໍລິສັດ*". ທົບທວນຄືນຂໍ້ມູນທາງດ້ານການເງິນການປີໂດຍຫຍໍ້ປະກອບດ້ວຍການສອບຖາມບຸກຄົນສ່ວນໃຫຍ່ເປັນຜູ້ຮັບຜິດຊອບດ້ານການເງິນ, ການບັນຊີ, ການວິເຄາະປຽບທຽບ ແລະ ວິທີການກວດສອບອື່ນໆ. ການທົບທວນຄືນໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າ ການກວດສອບຕາມມາດຕະຖານການກວດສອບບັນຊີສາກົນ ແລະ ເຮັດໃຫ້ພວກຂ້າພະເຈົ້າ ບໍ່ສາມາດໄດ້ຄວາມເຊື່ອໝັ້ນວ່າຈະພົບເລື່ອງທີ່ມີສາລະສຳຄັນທັງໝົດ ເຊິ່ງອາດຈະພົບໄດ້ຈາກການກວດສອບ. ຕາມຄວາມເໝາະສົມ, ພວກຂ້າພະເຈົ້າບໍ່ໄດ້ສະແດງຄວາມຄິດເຫັນຕໍ່ຂໍ້ມູນທາງການເງິນລະຫວ່າງການກວດສອບ.

ສະຫຼຸບ

ຈາກການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ພົບສິ່ງທີ່ເປັນເຫດໃຫ້ເຊື່ອວ່າຂໍ້ມູນທາງການເງິນການປີໂດຍຫຍໍ້ ສຳລັບ ຮອບໄລຍະເວລາ ຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2018 ບໍ່ໄດ້ຖືກກະກຽມ, ໃນທຸກເນື້ອໃນສາລະສຳຄັນ ຕາມ ຫຼັກບັນຊີຂອງກຸ່ມບໍລິສັດ ດັ່ງອະທິບາຍໄວ້ໃນ ໝາຍເຫດ 2 ໃນຂໍ້ມູນທາງດ້ານການເງິນການປີໂດຍຫຍໍ້.

KPMG Lao Co., Ltd.

ບໍລິສັດ ເຄພີເອັມຈີ ລາວ ຈຳກັດ.
ນະຄອນຫຼວງວຽງຈັນ
ວັນທີ 22 ສິງຫາ 2018

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ມິຖຸນາ 2018 (ທົບທວນຄືນ)	31 ທັນວາ 2017	30 ມິຖຸນາ 2018 (ທົບທວນຄືນ)	31 ທັນວາ 2017
				(ລ້ານກີບ)	
ຊັບສິນ					
ເງິນລົງທຶນ ໃນບໍລິສັດລູກ	*4*	-	-	85.160	82.760
ເງິນລົງທຶນ ໃນວິສາຫະກິດ ຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	*5*	3.599.244	2.606.394	3.599.244	2.606.394
ເງິນລົງທຶນຈ່າຍລ່ວງໜ້າສຳລັບຊັບສິນພາຍໃຕ້ ສັນຍາສຳປະທານ ແລະ ເງິນລົງທຶນ	*6, 15*	3.814.645	4.436.159	4.612.026	5.101.121
ເງິນຈ່າຍລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ collar	*11*	29.521	36.058	29.521	36.058
ຊັບສິນຢູ່ພາຍໃຕ້ການສຳປະທານ	*7*	9.853.176	9.790.198	9.426.379	9.408.829
ເງິນຝາກໄລຍະຍາວ		95.952	66.334	95.952	66.334
ຊັບສິນທີ່ບໍ່ໝຸນວຽນອື່ນໆ		348.372	190.218	7.298	6.538
ລວມຊັບສິນບໍ່ໝຸນວຽນ		17.740.910	17.125.361	17.855.580	17.308.034
ເງິນສົດ ແລະ ທຽບເທົ່າ ເງິນສົດ		592.723	756.738	497.834	678.322
ເງິນລົງທຶນໄລຍະສັ້ນ		129.239	955.301	129.239	955.301
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	*15*	394.941	463.392	394.941	463.392
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ	*8, 15*	576.196	149.452	567.305	144.598
ສ່ວນທີ່ເຖິງກຳນົດຈ່າຍເງິນລ່ວງໜ້າສຳລັບ ສັນຍາແລກປ່ຽນອັດຕາດອກເບ້ຍ collar	*11*	14.581	14.581	14.581	14.581
ອາໄຫ່ ແລະ ເຄື່ອງໃຊ້ສາງ		4.664	4.458	4.664	4.458
ຊັບສິນໝຸນວຽນອື່ນໆ		42.422	149.910	36.623	35.594
ລວມຊັບສິນໝຸນວຽນ		1.754.766	2.493.832	1.645.187	2.296.246
ລວມຍອດຊັບສິນ		19.495.676	19.619.193	19.500.767	19.604.280

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 22 ສິງຫາ 2018

ທ່ານ ບຸນສະໜອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 22 ສິງຫາ 2018

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		30 ມິຖຸນາ 2018 (ທົບທວນຄືນ)	31 ທັນວາ 2017	30 ມິຖຸນາ 2018 (ທົບທວນຄືນ)	31 ທັນວາ 2017
				(ລ້ານກີບ)	
ທຶນຂອງຜູ້ຖືຮຸ້ນ					
ຮຸ້ນທຶນ/ທຶນຈົດທະບຽນ		6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ		985.621	985.621	985.621	985.621
ຄັງສະສົມຕາມລະບຽບການ		463.944	463.944	463.944	463.944
ຜົນຕ່າງຈາກການແປງຄ່າ ເອກະສານລາຍງານການເງິນ		5.466	2.302	5.466	2.302
ກຳໄລສະສົມ		830.408	1.040.000	835.562	1.042.447
ສ່ວນຂອງຜູ້ຖືຮຸ້ນບໍລິສັດ		9.002.654	9.209.082	9.007.808	9.211.529
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(2.559)	(263)	-	-
ລວມຍອດທຶນຂອງຜູ້ຖືຮຸ້ນທັງໝົດ		9.000.095	9.208.819	9.007.808	9.211.529
ໜີ້ສິນ					
ເງິນກູ້ຢືມໄລຍະຍາວ	*9*	3.929.330	4.206.348	3.929.330	4.206.348
ຮຸ້ນກູ້	*10*	4.250.599	4.152.882	4.250.599	4.152.882
ໜີ້ຕ້ອງສິ່ງສັນຍາແລກປ່ຽນ SWAP	*11*	6.524	3.856	6.524	3.856
ລວມໜີ້ສິນບໍ່ໝຸນວຽນ		8.186.453	8.363.086	8.186.453	8.363.086
ເງິນກູ້ຢືມໄລຍະສັ້ນ	*9*	951.972	870.573	951.972	870.573
ເງິນກູ້ຢືມໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	*9*	562.367	529.912	562.367	529.912
ໜີ້ຕ້ອງສິ່ງການຄ້າ ແລະ ອື່ນໆ		683.415	535.079	682.160	517.911
ລາຍຈ່າຍຄ້າງຈ່າຍ		110.677	111.222	109.311	110.767
ໜີ້ສິນໝຸນວຽນອື່ນໆ		697	502	696	502
ລວມຍອດໜີ້ສິນໝຸນວຽນ		2.309.128	2.047.288	2.306.506	2.029.665
ລວມຍອດໜີ້ສິນ		10.495.581	10.410.374	10.492.959	10.392.751
ລວມຍອດທຶນຕົນເອງ ແລະ ໜີ້ສິນ		19.495.676	19.619.193	19.500.767	19.604.280

ທ່ານ ບຸນສະໜອງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ : 22 ສິງຫາ 2018

ທ່ານ ວິໄຊ ລັກຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 22 ສິງຫາ 2018

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບຫົກເດືອນສິ້ນສຸດ 30 ມິຖຸນາ 2018	2017	ເອກະສານລາຍງານການເງິນ ແບບແຍກ ສຳລັບຫົກເດືອນສິ້ນສຸດ 30 ມິຖຸນາ 2018	2017
			(ລ້ານກີບ)		
ສືບຕໍ່ດຳເນີນງານ					
ຂາຍ	15	515.497	574.566	506.472	573.305
ຕົ້ນທຶນໃນການຂາຍ		(231.291)	(222.462)	(225.967)	(222.044)
ກຳໄລລວມ		284.206	352.104	280.505	351.261
ລາຍຮັບອື່ນໆ	15	21.253	13.029	21.253	13.029
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ		(77.837)	(64.663)	(75.714)	(63.327)
ຂາດທຶນ ຈາກອັດຕາແລກປ່ຽນ		(154.524)	(45.646)	(147.943)	(45.090)
ກຳໄລ ຂອງຮຸ້ນຈາກເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	5	268.677	120.593	268.677	120.593
ກຳໄລຈາກການດຳເນີນງານ		**341.775**	**375.417**	**346.778**	**376.466**
ລາຍຈ່າຍທາງການເງິນ	15	(251.388)	(239.875)	(251.388)	(239.875)
ກຳໄລກ່ອນອາກອນກຳໄລ		**90.387**	**135.542**	**95.390**	**136.591**
ອາກອນກຳໄລ		-	(6.352)	-	(6.352)
ກຳໄລໃນຮອບເວລາ		**90.387**	**129.190**	**95.390**	**130.239**
ກຳໄລທີ່ໄດ້ຮັບ:					
ເຈົ້າຂອງບໍລິສັດແມ່		92.683	129.663	95.390	130.239
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(2.296)	(473)	-	-
ກຳໄລໃນຮອບເວລາ		**90.387**	**129.190**	**95.390**	**130.239**
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ *(ກີບ)*	12	55,20	77,22	56,81	77,57

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 22 ສິງຫາ 2018

ທ່ານ ບຸນສະຫງວງ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 22 ສິງຫາ 2018

		ເອກະສານລາຍງານການເງິນແບບລວມ ສ່ວນຂອງຜູ້ຖືຮຸ້ນບໍລິສັດ							
	ບົດອະທິບາຍ	ທຶນ ຈົດທະບຽນ	ສ່ວນເພີ່ມ ມູນຄ່າຮຸ້ນ	ຄັງສະສົມຕາມ ລະບຽບການ	ຜົນຕ່າງຈາກການ ແປງຄ່າເງິນ	ກຳໄລ ສະສົມ	ລວມ	ສ່ວນໄດ້ເສຍ ທີ່ບໍ່ມີອຳນາດ ການຄວບຄຸມ	ລວມຍອດທຶນ ຂອງຜູ້ຖືຮຸ້ນ
					(ລ້ານກີບ)				
ຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2017									
ຍອດເຫຼືອໃນວັນທີ 1 ມັງກອນ 2017		6.717.215	985.621	416.729	(1.342)	1.068.179	9.186.402	-	9.186.402
ຊື້ສ່ວນໄດ້ເສຍທີ່ບໍ່ມີອຳນາດໃນການຄວບຄຸມຂອງບໍລິສັດລູກ		-	-	-	-	-	-	1.000	1.000
ກຳໄລໃນຮອບເວລາ		-	-	-	-	129.663	129.663	(473)	129.190
ຜົນຕ່າງຈາກການແປງຄ່າເງິນ		-	-	-	661	-	661	-	661
ຈ່າຍເງິນປັນຜົນ	*13*	-	-	-	-	(268.689)	(268.689)	-	(268.689)
ຍອດເຫຼືອໃນວັນທີ 30 ມິຖຸນາ 2017		**6.717.215**	**985.621**	**416.729**	**(681)**	**929.153**	**9.048.037**	**527**	**9.048.564**
ຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2018									
ຍອດເຫຼືອໃນວັນທີ 1 ມັງກອນ 2018		6.717.215	985.621	463.944	2.302	1.040.000	9.209.082	(263)	9.208.819
ກຳໄລໃນຮອບເວລາ		-	-	-	-	92.683	92.683	(2.296)	90.387
ຜົນຕ່າງຈາກການແປງຄ່າເງິນ		-	-	-	3.164	-	3.164	-	3.164
ຈ່າຍເງິນປັນຜົນ	*13*	-	-	-	-	(302.275)	(302.275)	-	(302.275)
ຍອດເຫຼືອໃນວັນທີ 30 ມິຖຸນາ 2018		**6.717.215**	**985.621**	**463.944**	**5.466**	**830.408**	**9.002.654**	**(2.559)**	**9.000.095**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ

ໃບລາຍງານສ່ວນປ່ຽນແປງຂອງທຶນ ໂດຍຫຍໍ້ (ທົບທວນຄືນ)

	ບົດອະທິບາຍ	ທຶນ ຈົດທະບຽນ	ສ່ວນເພີ່ມ ມູນຄ່າຮຸ້ນ	ເອກະສານລາຍງານການເງິນແຍກ ຕ່າງສະສົມຕາມ ລະບຽບການ	ຜົນຕ່າງຈາກການ ແປງຄ່າເງິນ	ກຳໄລ ສະສົມ	ລວມຍອດທຶນ ຂອງຜູ້ຖືຮຸ້ນ
				(ລ້ານກີບ)			
ຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2017							
ຍອດເຫຼືອໃນວັນທີ 1 ມັງກອນ 2017		6.717.215	985.621	416.729	(1.342)	1.070.927	9.189.150
ກຳໄລໃນຮອບເວລາ		-	-	-	-	130.239	130.239
ຜົນຕ່າງຈາກການແປງຄ່າເງິນ		-	-	-	661	-	661
ຈ່າຍເງິນປັນຜົນ	*13*	-	-	-	-	(268.689)	(268.689)
ຍອດເຫຼືອໃນວັນທີ 30 ມິຖຸນາ 2017		**6.717.215**	**985.621**	**416.729**	**(681)**	**932.477**	**9.051.361**
ຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2018							
ຍອດເຫຼືອໃນວັນທີ 1 ມັງກອນ 2018		6.717.215	985.621	463.944	2.302	1.042.447	9.211.529
ກຳໄລໃນຮອບເວລາ		-	-	-	-	95.390	95.390
ຜົນຕ່າງຈາກການແປງຄ່າເງິນ		-	-	-	3.164	-	3.164
ຈ່າຍເງິນປັນຜົນ	*13*	-	-	-	-	(302.275)	(302.275)
ຍອດເຫຼືອໃນວັນທີ 30 ມິຖຸນາ 2018		**6.717.215**	**985.621**	**463.944**	**5.466**	**835.562**	**9.007.808**

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 22 ສິງຫາ 2018

ທ່ານ ບຸນສະຫງວ ສຸດທິດາຣາ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 22 ສິງຫາ 2018

ບົດອະທິບາຍ ປະກອບເຫຼົ່ານີ້ແມ່ນສ່ວນທີ່ສຳຄັນຂອງຂໍ້ມູນທາງດ້ານການເງິນ

	ບົດອະທິບາຍ	ເອກະສານລາຍງານການເງິນ ແບບລວມ ສຳລັບຫົກເດືອນສິ້ນສຸດ 30 ມິຖຸນາ 2018	2017	ເອກະສານລາຍງານການເງິນ ແບບແຍກ ສຳລັບຫົກເດືອນສິ້ນສຸດ 30 ມິຖຸນາ 2018	2017
			(ລ້ານກີບ)		
ກະແສເງິນສົດຈາກກິດຈະກຳການດຳເນີນງານ					
ກຳໄລໃນຮອບເວລາ		90.387	129.190	95.390	130.239
ປັບປຸງ :					
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ	7	225.469	204.052	206.721	203.552
ລາຍຈ່າຍການເງິນ		251.388	239.875	251.388	239.875
ຂາດທຶນ ຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ຮັບຮູ້		177.208	46.014	170.205	46.005
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	5	(268.677)	(120.593)	(268.677)	(120.593)
ລາຍຈ່າຍອາກອນກຳໄລ		-	6.352	-	6.352
		475.775	504.890	455.027	505.430
ປ່ຽນແປງໃນ:					
ຊັບສິນທີ່ບໍ່ໝຸນວຽນອື່ນໆ		(158.154)	(11.760)	(760)	(129.278)
ໜີ້ຕ້ອງຮັບຈາກລູກຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(539.270)	(464.570)	(535.233)	(463.388)
ອາໄໝ່ ເຄື່ອງໃນສາງ		(206)	406	(206)	406
ຊັບສິນໝຸນວຽນອື່ນໆ		107.488	(4.677)	(1.029)	(5.009)
ໜີ້ຕ້ອງສົ່ງການຄ້າ ແລະ ອື່ນໆ		(35.178)	(2.116)	(19.265)	(1.943)
ລາຍຈ່າຍຄ້າງຈ່າຍ		9.702	(5.411)	8.790	(6.496)
ໜີ້ສິນໝຸນວຽນອື່ນໆ		195	1.243	194	(4.070)
ເງິນສົດຈາກ(ທີ່ໃຊ້ໃນ) ກິດຈະກຳການດຳເນີນງານ		(139.648)	18.005	(92.482)	(104.348)
ຈ່າຍອາກອນກຳໄລ		-	(27.663)	-	(27.663)
ເງິນສົດສຸດທິທີ່ໃຊ້ໃນກິດຈະກຳການດຳເນີນງານ		**(139.648)**	**(9.658)**	**(92.482)**	**(132.011)**
ກະແສເງິນສົດຈາກກິດຈະກຳການລົງທຶນ					
ເງິນລົງທຶນຈ່າຍລ່ວງໜ້າສຳລັບຊັບສິນພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ		-	-	(125.415)	-
ເງິນລົງທຶນໃນບໍລິສັດລູກ	4	-	-	(2.400)	(1.500)
ເງິນສົດໄດ້ຈາກສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມ		-	1.000	-	-
ເງິນລົງທຶນໃນບໍລິສັດຮຸ້ນສ່ວນ ແລະ ວິສາຫະກິດຮຸ້ນສ່ວນ	5	(321.383)	(1.634)	(321.383)	(1.634)
ຊື້ຊັບສິນພາຍໃຕ້ສັນຍາສຳປະທານ		(104.454)	(207.578)	(40.278)	(139.955)
ຫຼຸດລົງເງິນລົງທຶນໄລຍະສັ້ນ		826.062	-	826.062	-
ຮັບເງິນປັນຜົນຈາກເງິນລົງທຶນໃນວິສາຫະກິດ ຮຸ້ນສ່ວນ ແລະ ບໍລິສັດຮຸ້ນສ່ວນ	5	205.390	130.591	205.390	130.591
ຈ່າຍເງິນລົງທຶນໄລຍະຍາວ		(29.618)	-	(29.618)	-
ເງິນສົດສຸດທິຈາກ(ທີ່ໃຊ້ໃນ) ກິດຈະກຳການລົງທຶນ		**575.997**	**(77.621)**	**512.358**	**(12.498)**

		ເອກະສານລາຍງານການເງິນ ແບບລວມ ສຳລັບຫົກເດືອນສິ້ນສຸດ 30 ມິຖຸນາ		ເອກະສານລາຍງານການເງິນ ແບບແຍກ ສຳລັບຫົກເດືອນສິ້ນສຸດ 30 ມິຖຸນາ	
	ບົດອະທິບາຍ	2018	2017	2018	2017
			(ລ້ານກີບ)		
ກະແສເງິນສົດຈາກ ກິດຈະກຳທາງການເງິນ					
ລາຍຈ່າຍທາງການເງິນ		(258.160)	(283.176)	(258.160)	(283.176)
ຈ່າຍເງິນສົດເພື່ອອອກໃບສຳຄັນສະແດງສິດ		(7.461)	-	(7.461)	-
ຈ່າຍເງິນປັນຜົນ		(87.464)	(72.957)	(87.464)	(72.957)
ຮັບເງິນສົດຈາກການກູ້ຢືມໄລຍະສັ້ນ	9	107.105	-	107.105	-
ຮັບເງິນສົດຈາກການກູ້ຢືມໄລຍະຍາວ	9	332.440	12.676	332.440	12.676
ຊຳລະເງິນກູ້ໄລຍະສັ້ນ	9	(42.075)	-	(42.075)	-
ຊຳລະເງິນກູ້ໄລຍະຍາວ	9	(644.749)	(243.594)	(644.749)	(243.594)
ເງິນສົດສຸດທິທີ່ໃຊ້ໃນ ກິດຈະການທາງການເງິນ		**(600.364)**	**(587.051)**	**(600.364)**	**(587.051)**
ເງິນສົດ ແລະ ທຽບເທົ່າເງິນສົດ ຫຼຸດລົງສຸດທິ		(164.015)	(674.330)	(180.488)	(731.560)
ຜົນກະທົບຈາກອັດຕາແລກປ່ຽນຂອງສະກຸນເງິນ ຕາຕ່າງປະເທດທີ່ມີໃນມືໃນມື້ສິ້ນງວດ		-	14.047	-	14.047
ເງິນສົດ ແລະ ທຽບເທົ່າເງິນສົດ ໃນຕົ້ນງວດ		756.738	2.249.635	678.322	2.235.280
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍງວດ		**592.723**	**1.589.352**	**497.834**	**1.517.767**
ລາຍການທີ່ບໍ່ແມ່ນເງິນສົດ					
ໜີ້ຕ້ອງສົ່ງຊັບສິນທີ່ຊື້ພາຍໃຕ້ສັນຍາສຳປະທານ		497.748	261.384	497.748	261.384
ຊິດເຊີຍການຈ່າຍເງິນປັນຜົນກັບ ໜີ້ຕ້ອງສົ່ງການຄ້າ ແລະ ອື່ນໆ		115.999	160.731	115.999	160.731
ຊິດເຊີຍການຈ່າຍເງິນປັນຜົນກັບການຊຳລະເງິນກູ້ຢືມ		75.316	-	75.316	-
ຊິດເຊີຍການຊຳລະເງິນກູ້ຢືມກັບໜີ້ຕ້ອງຮັບ ການຄ້າ ແລະ ອື່ນໆ		115.990	19.369	115.990	19.369
ຊິດເຊີຍໜີ້ຕ້ອງສົ່ງສຳລັບຊັບສິນພາຍໃຕ້ສັນຍາສຳປະທານ ກັບເງິນກູ້ຢືມໄລຍະຍາວ		-	3.957.400	-	3.957.400
ຊິດເຊີຍການຈ່າຍເງິນປັນຜົນກັບເງິນຈ່າຍລ່ວງໜ້າຊັບສິນພາຍໃຕ້ ສຳປະທານ ແລະ ເງິນລົງທຶນ		23.975	-	23.975	-
ໂອນຈາກເງິນຈ່າຍລ່ວງໜ້າຊັບສິນພາຍໃຕ້ສຳປະທານ ແລະ ເງິນລົງທຶນ ມາເປັນເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ		605.016	-	605.016	-

ທ່ານ ນາງ ລັດຕະນາ ປະທຸມວັນ
ຜູ້ອຳນວຍການໃຫຍ່
ວັນທີ: 22 ສິງຫາ 2018

ທ່ານ ບຸນສະຫງວ່ ສຸດທິດາຣ໋
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 22 ສິງຫາ 2018

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ບົດອະທິບາຍຊ້ອນທ້າຍຂໍ້ມູນທາງດ້ານການເງິນການປີ ໂດຍຫຍໍ້
ສຳລັບຫົກເດືອນຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2018 (ທົບທວນຄືນ)

ບົດ ອະທິບາຍ	ເນື້ອໃນ
ພື້ນຖານການກະກຽມ	
1	ການລາຍງານກິດຈະການ
2	ພື້ນຖານການບັນຊີ
ພາກສ່ວນການດຳເນີນງານ	
3	ພາກສ່ວນການດຳເນີນງານ
ຊັບສິນ	
4	ເງິນລົງທຶນ ໃນບໍລິສັດລູກ
5	ເງິນລົງທຶນ ໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ
6	ຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ
7	ຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ
8	ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ
ໜີ້ສິນ	
9	ເງິນກູ້ຢືມ
10	ຮຸ້ນກູ້
11	ຕາສານອະນຸພັນ
ຂໍ້ມູນອື່ນໆ	
12	ພື້ນຖານກຳໄລຕໍ່ຮຸ້ນ
13	ເງິນປັນຜົນ
14	ພະລະຜູກພັນກັບພາກສ່ວນທີ່ບໍ່ກ່ຽວຂ້ອງ
15	ພາກສ່ວນທີ່ກ່ຽວຂ້ອງ
16	ເຫດການເກີດຂຶ້ນພາຍຫຼັງວັນທີ່ລາຍງານ
17	ຂໍ້ມູນເພີ່ມເຕີມ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ບົດອະທິບາຍຊ້ອນທ້າຍຂໍ້ມູນທາງດ້ານການເງິນກາງປີ ໂດຍຫຍໍ້
ສຳລັບຫົກເດືອນຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2018 (ທົບທວນຄືນ)

1 ການລາຍງານກິດຈະການ

ບໍລິສັດ ຜະລິດ-ໄຟຟ້າ ລາວ ມະຫາຊົນ (“ບໍລິສັດ” ຫຼື “ຜ-ຟຟລ”) ເປັນບໍລິສັດມະຫາຊົນ ເຊິ່ງໄດ້ຈົດທະບຽນເຂົ້າໃນ ຕະຫຼາດຫຼັກຊັບແຫ່ງ ສປປລາວ (“ຕລຊລ”) ວັນທີ 11 ມັງກອນ 2011 ແລະ ຖືກຄຸ້ມຄອງໂດຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປລາວ”). ບໍລິສັດໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈົດທະບຽນກັບ ກະຊວງ ອຸດສະຫະ ກຳ ແລະ ການຄ້າ ໃນວັນທີ 15 ທັນວາ 2010. ເປັນບໍລິສັດໃນເຄືອຂອງ ລັດວິສາຫະກິດໄຟຟ້າລາວ (“ຟຟລ”) ເຊິ່ງຖືຮຸ້ນ 75%.

ການຈົດທະບຽນຂອງບໍລິສັດໄດ້ລິເລີ່ມໂດຍ ຟຟລ ເຊື່ອມຕໍ່ກັບການປັບໂຄງສ້າງ ຂອງທຸລະກິດ ພະລັງງານຂອງ ຟຟລ ໂດຍການໂອນຊັບສິນການຜະລິດທີ່ມີຢູ່ ແລະ ສິດທິສະເພາະດ້ານໃດດ້ານໜຶ່ງ ແລະ ພັນທະຂອງບໍລິສັດ ອີງຕາມສຳນັກ ງານນາຍົກລັດຖະມົນຕີ ("ສນຍ") ສະບັບເລກທີ 180 ລົງວັນທີ 13 ທັນວາ 2010. ສນຍ ໄດ້ອະນຸມັດໃຫ້ ຟຟລ ຂາຍ ຮຸ້ນຂອງຕົນໃນໂຄງການໂຮງງານໄຟຟ້າເອກະລາດ ("IPP") ໂຄງການກັບບໍລິສັດ.

ໃນວັນທີ 15 ທັນວາ 2010, ຟຟລ ໄດ້ໂອນຊັບສິນການຜະລິດທີ່ມີຢູ່ ແລະ ໜີ້ສິນທີ່ກ່ຽວຂ້ອງຂອງ 7 ເຂື່ອນໄຟຟ້າ, ລວມ ມີ ເຂື່ອນນ້ຳງື່ມ 1, ເຂື່ອນນ້ຳເລີກ, ເຂື່ອນນ້ຳມັງ 3, ເຂື່ອນນ້ຳຊອງ, ເຂື່ອນເຊເຊັດ 1, ເຂື່ອນເຊເຊັດ 2, ເຂື່ອນເຊລະບ□ າ , ຕາມມູນຄ່າສຸດທິ ໃນວັນທີ 20 ຕຸລາ 2010, ໃຫ້ບໍລິສັດ ເປັນຈຳນວນເງິນ 2.605.792 ລ້ານກີບ. ຟຟລ ຈະສືບຕໍ່ກິດ ຈະກຳຂອງຕົນຢູ່ໃນລະບົບສາຍສົ່ງ ແລະ ການແຜ່ກະຈາຍຂອງໄຟຟ້າທີ່ຜະລິດໂດຍທີ່ມີຢູ່ຊັບສິນການຜະລິດໄປເຖິງຜູ້ ຊົມໃຊ້, ຕັ້ງແຕ່ 15 ທັນວາ 2010, ບໍລິສັດໄດ້ເລີ່ມການດຳເນີນງານການຜະລິດໄຟຟ້າ ຂອງຕົນສ່ວນໃຫຍ່ແມ່ນຂຶ້ນຢູ່ກັບ ຊັບສິນການໂອນຍ້າຍ ດັ່ງກ່າວຈະສະໜອງໄຟຟ້າທີ່ຜະລິດ ກັບຄືນໄປໃຫ້ ຟຟລ ອີງຕາມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ລະບຸ ໄວ້ໃນ ສັນຍາ ຊື້ຂາຍພະລັງງານ ("PPA").

ນອກຈາກນັ້ນ, ບໍລິສັດໄດ້ສືບຕໍ່ຊື້ໂຄງການພະລັງງານ ແລະ ສ້າງຕັ້ງບໍລິສັດຮ່ວມທຶນໃໝ່ກັບຄູ່ສັນຍາທີ່ກ່ຽວຂ້ອງ ແລະ ຟຟລ.

ທີ່ຕັ້ງສຳນັກງານຂອງບໍລິສັດຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວ-ໄທ, ບ້ານ ທົ່ງ ກາງເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ.

ຂໍ້ມູນທາງດ້ານການເງິນກາງປີ ໂດຍຫຍໍ້ໄດ້ຮັບອະນຸມັດໃຫ້ອອກ ໂດຍຄະນະກຳມະການຜູ້ບໍລິຫານ ວັນທີ 22 ສິງ 2018.

2 ພື້ນຖານການບັນຊີ

ຂໍ້ມູນທາງດ້ານການເງິນກາງປີ ໂດຍຫຍໍ້ ໄດ້ສ້າງຂຶ້ນຕາມນະໂຍບາຍການບັນຊີຂອງກຸ່ມບໍລິສັດ ຕາມທີ່ໄດ້ອະທິບາຍລະອຽດໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2017. ເອກະສານລາຍງານການເງິນ ແລະ ບົດອະທິບາຍປະກອບຂໍ້ມູນທາງການເງິນ ໃນເບື້ອງຕົ້ນທີ່ໄດ້ຖືກກະກຽມເປັນຮູບແບບໂດຍຫຍໍ້. ບໍ່ໄດ້ລວມຂໍ້ມູນທັງໝົດທີ່ຈຳເປັນສຳລັບເອກະສານລາຍງານການເງິນປະຈຳປີ.ເຖິງຢ່າງໃດກໍ່ຕາມການເລືອກອະທິບາຍໝາຍເຫດປະກອບເອກະສານລາຍງານ ທີ່ລວມມີການອະທິບາຍເຫດການທີ່ເກີດຂຶ້ນ ແລະ ລາຍການທີ່ມີສາລະສຳຄັນຕໍ່ຄວາມເຂົ້າໃຈໃນການປ່ຽນແປງຖານະການເງິນຂອງກຸ່ມບໍລິສັດ ຕັ້ງແຕ່ເອກະສານລາຍງານການເງິນປະຈຳປີຜ່ານມາ.

ຂໍ້ມູນທາງດ້ານການເງິນກາງປີໂດຍຫຍໍ້ ຄວນຈະອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2017.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນບໍ່ສະໝ່ຳສະເໝີ ໃນລະຫວ່າງປີການບັນຊີ ຈະມີການຄາດການ ຫຼື ເຍື້ອນອອກໄປໃນລາຍງານກາງປີ ສະເພາະກໍລະນີທີ່ເໝາະສົມ ທີ່ຈະຄາດການ ຫຼື ເລື່ອນໄລຍະເວລາການຈ່າຍເຫຼົ່ານີ້ ໃນຊ່ວງທ້າຍປີການບັນຊີ.

ມາດຕະຖານການບັນຊີໃນ ສປປລາວ ຍັງບໍ່ທັນໄດ້ມີການຄວບຄຸມ (“LAS”). LAS ກຳລັງຢູ່ໃນລະຫວ່າງການພັດທະນາພາຍໃຕ້ກົມບັນຊີ ແລະ ສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ (LCPAA). ໃນປັດຈຸບັນ, ບັນດາບໍລິສັດໄດ້ນຳໃຊ້ປຶ້ມຄູ່ມືການບັນຊີ (LAM) ທີ່ວາງອອກໂດຍກະຊວງການເງິນ. ປຶ້ມຄູ່ມືດັ່ງກ່າວໄດ້ໃຫ້ຂໍ້ແນະນຳຕາມເກນບັນຊີຄົງຄ້າງ. ດັ່ງນັ້ນ ຈຶ່ງມີຄວາມແຕກຕ່າງຢ່າງມີສາລະສຳຄັນລະຫວ່າງ LAM ແລະ ມາດຕະຖານການລາຍງານການເງິນສາກົນ (“IFRS”) ໃນຂອບເຂດເຫຼົ່ານີ້ທີ່ມີຄວາມແຕກຕ່າງຢ່າງມີສາລະສຳຄັນ ເຊັ່ນ: ຊັບສົມບັດຄົງທີ່, ສັນຍາເຊົ່າ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ, ອາກອນກຳໄລ ແລະ ອາກອນກຳໄລເຍື້ອນຊຳລະ, ເຄື່ອງມືທາງການເງິນ, ວິສາຫະກິດຂະໜ້ອມ, ບໍລິສັດຮຸ້ນສ່ວນ ແລະ ຕົ້ນທຶນກ່ອນການດຳເນີນງານ. ຫຼັກການບັນຊີທີ່ນຳໃຊ້ ອາດມີຄວາມແຕກຕ່າງຢ່າງມີສາລະສຳຄັນຈາກຫຼັກການບັນຊີທີ່ຖືກຮັບຮອງເອົາໂດຍທົ່ວໄປ ຊຶ່ງລວມທັງ IFRS ທີ່ນຳໃຊ້ໃນບາງປະເທດ ແລະ ບາງຂອບເຂດ.

ໃນການກະກຽມຂໍ້ມູນທາງດ້ານການເງິນກາງປີ ໂດຍຫຍໍ້ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການປະເມີນການ ແລະ ຂໍ້ສົມມຸດຖານທີ່ມີຜົນຕໍ່ການລາຍງານຈຳນວນຂອງຊັບສິນ ແລະ ໜີ້ສິນ, ການເປີດເຜີຍຂອງຊັບສິນ ແລະ ໜີ້ສິນ ທີ່ອາດເກີດຂຶ້ນໃນມື້ທີ່ສະແດງຂໍ້ມູນທາງດ້ານການເງິນກາງປີ ໂດຍຫຍໍ້ ແລະ ມູນຄ່າຂອງລາຍໄດ້ ແລະ ລາຍຈ່າຍໃນຮອບການລາຍງານ. ເຖິງແມ່ນວ່າການປະເມີນການຢູ່ບົນພື້ນຖານຂອງຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ເຫດການທີ່ເກີດຂຶ້ນ ແລະ ຜົນທີ່ເກີດຂຶ້ນຈິງ ອາດແຕກຕ່າງຈາກທີ່ປະເມີນການໄວ້ໃນເບື້ອງຕົ້ນ.

3 ພາກສ່ວນດຳເນີນງານ

ກຸ່ມບໍລິສັດມີ 2 ພາກສ່ວນລາຍງານຕາມທີ່ໄດ້ອະທິບາຍໄວ້ຂ້າງລຸ່ມ ເຊິ່ງເປັນໜ່ວຍງານດ້ານຍຸດທະສາດຂອງກຸ່ມບໍລິສັດ ໜ່ວຍງານດ້ານຍຸດທະສາດ ມີຂະໜາດແຕກຕ່າງກັນຂອງທຸລະກິດ. ສັງລວມຄຳອະທິບາຍການດຳເນີນງານ ດັ່ງຕໍ່ໄປນີ້ ໃນແຕ່ລະສ່ວນຂອງລາຍງານຂອງກຸ່ມບໍລິສັດ.

- ສ່ວນທີ 1: ການຜະລິດໄຟຟ້າ
- ສ່ວນທີ 2: ທຸລະກິດອື່ນໆ

ຂໍ້ມູນກ່ຽວກັບຜົນການດຳເນີນງານຂອງແຕ່ລະສ່ວນລາຍງານຈະຖືກລວມຢູ່ຂ້າງລຸ່ມ. ປະສິດທິພາບການປະຕິບັດງານຈະວັດຈາກກຳໄລຂອງສ່ວນງານ, ລວມໄວ້ໃນບົດລາຍງານບໍລິການພາຍໃນ ທີ່ໄດ້ຮັບການກວດສອບໂດຍກຸ່ມ CODM ກຳໄລຂອງສ່ວນງານ ເຄີຍຖືກໃຊ້ວັດແທກປະສິດທິພາບການປະຕິບັດງານ ຊຶ່ງຜູ້ບໍລິຫານເຊື່ອວ່າຂໍ້ມູນດັ່ງກ່າວເປັນທີ່ກ່ຽວຂ້ອງຫຼາຍທີ່ສຸດໃນການປະເມີນຜົນການບາງສ່ວນເມື່ອທຽບກັບວິສາຫະກິດອື່ນໆທີ່ເຮັດວຽກໃນອຸດສະຫະກຳເຫຼົ່ານີ້.

ສຳລັບຮອບເວລາຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2018

	ສ່ວນທີ 1	**ສ່ວນທີ 2**	**ຕັດອອກ**	**ລວມ**
		(ລ້ານກີບ)		
ຂາຍ	515.497	-	-	515.497
ຕົ້ນທຶນໃນການຂາຍ	(231.291)	-	-	(231.291)
ຜົນຮັບ	284.206	-	-	284.206
ລາຍຮັບອື່ນໆ	21.253	-	-	21.253
ລາຍຈ່າຍໃນການດຳເນີນງານ ແລະ ຄ່າບໍລິຫານ	(77.837)		-	(77.837)
ຂາດທຶນຈາກອັດຕາແລກປ່ຽນ ສຸດທິ	(154.524)	-	-	(154.524)
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	-	268.677	-	268.677
ກຳໄລຈາກການດຳເນີນງານ	73.098	268.677	-	341.775
ລາຍຈ່າຍທາງການເງິນ	(251.388)	-	-	(251.388)
ກຳໄລ(ຂາດທຶນ)ສຸດທິກ່ອນຈ່າຍອາກອນກຳໄລ	(178.290)	268.677	-	90.387
ລາຍຈ່າຍອາກອນກຳໄລ	-	-	-	-
ກຳໄລ(ຂາດທຶນ) ສຸດທິໃນງວດ	**(178.290)**	**268.677**	**-**	**90.387**

ສຳລັບຮອບເວລາຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2017

	ສ່ວນທີ 1	**ສ່ວນທີ 2**	**ຕັດອອກ**	**ລວມ**
		(ລ້ານກີບ)		
ຂາຍ	574.566	-	-	574.566
ຕົ້ນທຶນໃນການຂາຍ	(222.462)	-	-	(222.462)
ຜົນຮັບ	352.104	-	-	352.104
ລາຍຮັບອື່ນໆ	13.029	-	-	13.029
ລາຍຈ່າຍໃນການດຳເນີນງານ ແລະ ຄ່າບໍລິຫານ	(64.663)	-	-	(64.663)
ຂາດທຶນຈາກອັດຕາແລກປ່ຽນ ສຸດທິ	(45.646)	-	-	(45.646)
ສ່ວນແບ່ງກຳໄລຈາກ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	-	120.593	-	120.593
ກຳໄລຈາກການດຳເນີນງານ	254.824	120.593	-	375.417
ລາຍຈ່າຍທາງການເງິນ	(239.875)	-	-	(239.875)
ກຳໄລສຸດທິກ່ອນຈ່າຍອາກອນກຳໄລ	14.949	120.593	-	135.542
ລາຍຈ່າຍອາກອນກຳໄລ	(6.352)	-	-	(6.352)
ກຳໄລສຸດທິໃນງວດ	**8.597**	**120.593**	**-**	**129.190**

4 ເງິນລົງທຶນໃນບໍລິສັດລູກ

	ເອກະສານລາຍງານການເງິນ ແບບແຍກ	
	2018	2017
	(ລ້ານກີບ)	
ຍອດຍັງເຫຼືອ ວັນທີ 1 ມັງກອນ	82.760	81.260
ເພີ່ມຂຶ້ນ	2.400	1.500
ຍອດຍັງເຫຼືອ ວັນທີ 30 ມິຖຸນາ	**85.160**	**82.760**

ໃນໄລຍະເວລາຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2018, ບໍລິສັດໄດ້ເພີ່ມເງິນທຶນໃນບໍລິສັດລູກ ດັ່ງລຸ່ມນີ້:

ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ

ໃນລະຫວ່າງປີ 2018, ບໍລິສັດໄດ້ເພີ່ມເງິນລົງທຶນ ໃນບໍລິສັດ ນ້ຳບີ ພາວເວີ້ ຈຳກັດ, ຈຳນວນ 91.803 ລ້ານກີບ ຊຶ່ງທຶນຈົດທະບຽນຍັງບໍ່ທັນຖອກ ແລະ ນຳສະເໜີໃນເງິນລົງທຶນຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ, ໃນບົດອະທິບາຍ 6.

ບໍລິສັດ ອີດີແອວ – ເຈັນ ໂຊລ່າ ພາວເວີ້ ຈຳກັດ

ໃນລະຫວ່າງປີ 2018, ບໍລິສັດໄດ້ເພີ່ມເງິນລົງທຶນໃນບໍລິສັດ ອີດີແອວ – ເຈັນ ໂຊລ່າ ພາວເວີ້ ຈຳກັດ, ເປັນຈຳນວນລວມ 33.612 ລ້ານກີບ, ຊຶ່ງຍັງບໍ່ທັນໄດ້ຈົດທະບຽນ ແລະ ນຳສະເໜີໃນເງິນລົງທຶນຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ, ໃນບົດອະທິບາຍ 6.

ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອວເຈັນ ຈຳກັດຜູ້ດຽວ

ໃນວັນທີ 2 ເມສາ 2018, ບໍລິສັດໄດ້ຈ່າຍເງິນລົງທຶນສຳລັບທຶນຈົດທະບຽນຂອງ ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອວເຈັນ ຈຳກັດຜູ້ດຽວ, ເປັນບໍລິສັດລູກ ທີ່ດຳເນີນງານໃນ ສປປລາວ, ເປັນຈຳນວນ 2.400 ລ້ານກີບ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ບົດອະທິບາຍຊ້ອນທ້າຍຂໍ້ມູນທາງດ້ານການເງິນກາງປີ ໂດຍຫຍໍ້
ສຳລັບຫົກເດືອນຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2018 (ທົບທວນຄືນ)

ເງິນລົງທຶນໃນບໍລິສັດລູກໃນວັນທີ 30 ມິຖຸນາ 2018 ແລະ 31 ທັນວາ 2017, ແລະ ລາຍໄດ້ຈາກເງິນປັນຜົນ ຈາກການລົງທຶນເຫຼົ່ານີ້ ສຳລັບຮອບເວລາ ຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2018 ແລະ 2017 ມີດັ່ງນີ້:

						ເອກະສານລາຍງານການເງິນແບບແຍກ							
	ອັດຕາສ່ວນຂອງເງິນລົງທຶນ			ທຶນທີ່ຖອກແລ້ວ		ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ລາຍໄດ້ເງິນປັນຜົນ	
	30 ມິຖຸນາ 2018	31 ທັນວາ 2017	ປະເພດຂອງທຸລະກິດ	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	30 ມິຖຸນາ 2017
	(%)						*(ລ້ານກີບ)*						
ບໍລິສັດ ອີດີແອ-ເຈັນ ໂຊລ່າ ພາວເວີ້ ຈຳກັດ (“ໂຊລ່າ”)	60	60	ຜະລິດໄຟຟ້າ	2.500	2.500	1.500	1.500	-	-	1.500	1.500	-	-
ບໍລິສັດ ນ້ຳບີ ພາວເວີ້ ຈຳກັດ (“ນ້ຳບີ”)	80	80	ຜະລິດໄຟຟ້າ	80.000	80.000	81.260	81.260	-	-	81.260	81.260	-	-
ບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ອີດີແອວເຈັນ ຈຳກັດ ຜູ້ດຽວ (“EDL-GEN O&M”)	100	-	ບໍລິການບຳລຸງຮັກສາ	2.400	-	2.400		-	-	2.400		-	-
ລວມ						**85.160**	**82.760**	**-**	**-**	**85.160**	**82.760**	**-**	**-**

ບໍລິສັດລູກຂອງບໍລິສັດຍັງບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ສະນັ້ນຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

5 ເງິນລົງທຶນໃນອົສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

		ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
ສຳລັບຮອບເວລາ ຫົກເດືອນ ສິ້ນສຸດ ວັນທີ 30 ມິຖຸນາ	ບົດອະທິບາຍ	2018	2017
		(ລ້ານກີບ)	
ອົສາຫະກິດຂາຮຸ້ນ			
ວັນທີ 1 ມັງກອນ		769.492	606.728
ສ່ວນແບ່ງກຳໄລສຸດທິຂອງອົສາຫະກິດຂາຮຸ້ນ		15.803	10.215
ລາຍໄດ້ເງິນປັນຜົນ		(23.412)	(36.774)
ເພີ່ມທຶນ		319.227	-
ໂອນເງິນຈາກຈ່າຍລ່ວງໜ້າສຳລັບຊັບສິທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ	6	605.016	-
ສ່ວນຕ່າງຂອງການແປງສະກຸນເງິນ		(132)	96
ວັນທີ 30 ມິຖຸນາ		**1.685.994**	**580.265**
ບໍລິສັດຮຸ້ນສ່ວນ			
ວັນທີ 1 ມັງກອນ		1.836.902	1.690.438
ສ່ວນແບ່ງກຳໄລສຸດທິຂອງບໍລິສັດຮຸ້ນສ່ວນ		252.874	110.378
ລາຍໄດ້ເງິນປັນຜົນ		(181.978)	(93.817)
ເພີ່ມຂຶ້ນ		2.156	1.634
ສ່ວນຕ່າງຂອງການແປງສະກຸນເງິນ		3.296	565
ວັນທີ 30 ມິຖຸນາ		**1.913.250**	**1.709.198**
ລວມ			
ວັນທີ 1 ມັງກອນ		2.606.394	2.297.166
ສ່ວນແບ່ງກຳໄລສຸດທິຂອງອົສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ		268.677	120.593
ລາຍໄດ້ເງິນປັນຜົນ		(205.390)	(130.591)
ເພີ່ມຂຶ້ນ		321.383	1.634
ໂອນເງິນຈາກຈ່າຍລ່ວງໜ້າສຳລັບຊັບສິທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ	6	605.016	-
ສ່ວນຕ່າງຂອງການແປງສະກຸນເງິນ		3.164	661
ວັນທີ 30 ມິຖຸນາ		**3.599.244**	**2.289.463**

ໃນລະຫວ່າງຮອບເວລາຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2018, ໄດ້ມີການເພີ່ມຂຶ້ນຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ດັ່ງຕໍ່ໄປນີ້:

ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ

ບໍລິສັດ ໄດ້ເພີ່ມເງິນລົງທຶນໃນບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ, ເປັນຈຳນວນລວມ 38,59 ລ້ານໂດລາ ຫຼື ທຽບເທົ່າ 319.227 ລ້ານກີບ. ບໍລິສັດຍັງຮັກສາສ່ວນໄດ້ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ບໍລິສັດ ໄຟຟ້າ ນ້ຳພູນ ຈຳກັດ

ບໍລິສັດ ໄດ້ເພີ່ມເງິນລົງທຶນໃນບໍລິສັດ ໄຟຟ້າ ນ້ຳພູນ ຈຳກັດ, ເປັນຈຳນວນລວມ 665 ລ້ານກີບ. ບໍລິສັດຍັງຮັກສາສ່ວນໄດ້ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ

ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ ໄດ້ເພີ່ມທຶນຈົດທະບຽນ ແລະ ບໍລິສັດ ໄດ້ຈ່າຍເງິນລົງທຶນເພີ່ມ ເປັນຈຳນວນລວມ 0,18 ລ້ານໂດລາ ຫຼື ທຽບເທົ່າ 1.491 ລ້ານກີບ. ບໍລິສັດຍັງຮັກສາສ່ວນໄດ້ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ

ໃນລະຫວ່າງປີ 2018, 20% ຂອງຮຸ້ນບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ ໄດ້ຖືກໂອນມາໃຫ້ບໍລິສັດ, ໂດຍພິຈາລະນາເປັນເງິນສົດຈຳນວນ 72 ລ້ານໂດລາ, ອີງຕາມສັນຍາການໂອນຮຸ້ນທີ່ເປີດເຜີຍໃນບົດອະທິບາຍ 6. ບໍລິສັດ ໄຟຟ້າ ດອນ ສະໂຮງ ຈຳກັດ ເປັນເຂື່ອນທີ່ກຳລັງດຳເນີນການກໍ່ສ້າງ. ໃນວັນທີ 30 ມິຖຸນາ 2018, ສັນຍາຜູ້ຖືຮຸ້ນໃໝ່ຍັງຢູ່ໃນຂັ້ນຕອນ ການດຳເນີນງານ.

ເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນໃນວັນທີ 30 ມິຖຸນາ 2018 ແລະ 31 ທັນວາ 2017 ແລະ ເງິນປັນຜົນຈາກການລົງທຶນ ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2018 ແລະ 2017 ມີ ດັ່ງນີ້:

				ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ									
	ອັດຕາສ່ວນເງິນລົງທຶນ			ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ເງິນປັນຜົນ	
	30 ມິຖຸນາ 2018	31 ທັນວາ 2017	ປະເພດ ທຸລະກິດ	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017
	(%)			*(ລ້ານກີບ)*									
ວິສາຫະກິດຂາຮຸ້ນ													
ບໍລິສັດ ໄຟຟ້າ ນ້ຳງຶ່ມ 2 ຈຳກັດ (“ນ້ຳງຶ່ມ 2”)	25	25	ຜະລິດໄຟຟ້າ	454.742	454.742	-	-	454.742	454.742	409.483	422.953	23.412	36.774
ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ (“ນ້ຳລີກ 1-2”)	10	10	ຜະລິດໄຟຟ້າ	32.240	32.240	-	-	32.240	32.240	79.605	75.675	-	-
ບໍລິສັດ ໄຟຟ້າ ນ້ຳງຶ່ມ 5 ຈຳກັດ (“ນ້ຳງຶ່ມ 5”)	15	15	ຜະລິດໄຟຟ້າ	80.022	80.022	-	-	80.022	80.022	98.063	95.299	-	-
ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ (“ນ້ຳເທີນ 1”)	15	15	ຜະລິດໄຟຟ້າ	497.163	177.936	-	-	497.163	177.936	493.827	175.565	-	-
ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ (“ດອນສະ ໂຮງ”)	20	-	ຜະລິດໄຟຟ້າ	605.016	-	-	-	605.016	-	605.016	-	-	-
ລວມ				**1.669.183**	**744.940**	**-**	**-**	**1.669.183**	**744.940**	**1.685.994**	**769.492**	**23.412**	**36.774**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແລະ ບໍລິສັດລູກ
ບົດອະທິບາຍຊ້ອນທ້າຍຂໍ້ມູນທາງດ້ານການເງິນກາງປີ ໂດຍຫຍໍ້
ສຳລັບຫົກເດືອນຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2018 (ທົບທວນຄືນ)

	ອັດຕາສ່ວນເງິນລົງທຶນ			ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ເງິນປັນຜົນ	
	30 ມິຖຸນາ 2018	31 ທັນວາ 2017	ປະເພດ ທຸລະກິດ	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017
	(%)							*(ລ້ານກີບ)*					
ບໍລິສັດຮຸ່ນລ່ອນ													
ບໍລິສັດ ເທີນຫິນບຸນ ພາວ ເວີ ຈຳກັດ (“THPC”)	60	60	ຜະລິດໄຟຟ້າ	1.120.696	1.120.696	-	-	1.120.696	1.120.696	1.832.570	1.758.512	176.995	87.269
ບໍລິສັດ ຫ້ວຍເຫາະ ພາວເວີ ຈຳກັດ (“HHPC”)	20	20	ຜະລິດໄຟຟ້າ	1.171	1.171	-	-	1.171	1.171	19.136	16.972	4.983	6.548
ບໍລິສັດ ຫ້ວຍລຳພັນຕອນ ລຸ່ມ (“LHPC”)	60	60	ຜະລິດໄຟຟ້າ	11.251	9.760	-	-	11.251	9.760	7.230	6.448	-	-
ບໍລິສັດ ໄຟຟ້າ ນ້ຳດີກ (“ນ້ຳດີກ 1”)	70	70	ຜະລິດໄຟຟ້າ	54.942	54.942	-	-	54.942	54.942	53.692	54.130	-	-
ບໍລິສັດ ເຂື່ອນໄຟຟ້າ ນ້ຳພຸນ ຈຳກັດ (“NPPC”)	51	51	ຜະລິດໄຟຟ້າ	1.902	1.237	-	-	1.902	1.237	622	840	-	-
ລວມ				**1.189.962**	**1.187.806**	-	-	**1.189.962**	**1.187.806**	**1.913.250**	**1.836.902**	**181.978**	**93.817**
ລວມອີສາຫະກິດຂາ ຮຸ່ນ ແລະ ບໍລິສັດຮຸ່ນ ລ່ອນ				**2.859.145**	**1.932.746**	**-**	**-**	**2.859.145**	**1.932.746**	**3.599.244**	**2.606.394**	**205.390**	**130.591**

ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ

ໃນສ່ວນທີ່ກ່ຽວຂ້ອງກັບບໍລິສັດ ນ້ຳລີກ 1–2, ນ້ຳງື່ມ 5 ແລະ ນ້ຳເທີນ 1, ບໍລິສັດມີສິດໃນການອອກຄະແນນສຽງ ແລະ ທີ່ນັ່ງໃນສະພາຜູ້ບໍລິຫານ ແລະ ສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ເທົ່າກັບພາກສ່ວນທີ່ມີການຄວບຄຸມຮ່ວມກັນ). ຕາມທີ່ໄດ້ລະບຸໄວ້ໃນສັນຍາທີ່ກ່ຽວຂ້ອງກັບຜູ້ຖືຮຸ້ນ. ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າເປັນການລົງທຶນໃນວິສາຫະກິດຮ່ວມ.

ໃນສ່ວນທີ່ກ່ຽວຂ້ອງກັບ ບໍລິສັດເຫີນຫີນບຸນ, ຫ້ວຍເຫາະ, ຫ້ວຍລຳພັນຕອນລຸ່ມ, ນ້ຳດີກ 1 ແລະ ນ້ຳພຸນ, ເຖິງແມ່ນວ່າ ບໍລິສັດ ມີຮຸ້ນສ່ວນຢູ່ໃນບໍລິສັດເຫຼົ່ານັ້ນຫຼາຍກວ່າ ຫຼື ໜ້ອຍກວ່າ 50% ກໍ່ຕາມ, ແຕ່ອີງຕາມເງື່ອນໄຂຂອງຂໍ້ຕົກລົງບໍລິສັດຮຸ້ນສ່ວນ ແມ່ນໄດ້ລົງມະຕິຄະແນນສຽງ ແລະ ທີ່ນັ່ງໃນສະພາຜູ້ບໍລິຫານ ແລະ ສາມາດຕັດສິນໃຈໃນເລື່ອງການເງິນ ແລະ ການດຳເນີນງານ (ແຕ່ບໍ່ຫຼາຍເທົ່າບຸກຄົນທີ່ມີອຳນາດຄວບຄຸມທັງໝົດ).ຜູ້ບໍລິຫານຈຶ່ງສາມາດສະຫຼຸບໄດ້ວ່າ ເງິນລົງທຶນເຫຼົ່ານີ້ເປັນເງິນລົງທຶນໃນບໍລິສັດຮຸ້ນສ່ວນ.

ວິສາຫະກິດຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ຂອງບໍລິສັດຍັງບໍ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ສະນັ້ນຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

6 ເງິນຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ

		ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	ບົດອະທິບາຍ	2018	2017	2018	2017
			(ລ້ານກີບ)		
ວັນທີ 1 ມັງກອນ		4.436.159	3.133.596	5.101.121	3.133.596
ເພີ່ມຂຶ້ນ		-	-	125.415	-
ຫຼຸດລົງ		(23.976)	-	(23.976)	-
ໂອນຈາກການລົງທຶນ ໃນວິສາຫະກິດຮຸ້ນ	*5*	(605.016)	-	(605.016)	-
ລາຍຈ່າຍທາງການເງິນ		7.478	5.879	7.478	5.879
ສ່ວນຕ່າງຂອງການແປງສະກຸນເງິນ		-	-	7.004	-
ວັນທີ 30 ມິຖຸນາ		**3.814.645**	**3.139.475**	**4.612.026**	**3.139.475**

ເງິນລົງທຶນຈ່າຍລ່ວງໜ້າ ໃນວັນທີ 30 ມິຖຸນາ 2018 ແລະ 31 ທັນວາ 2017 ມີດັ່ງນີ້:

	ປະເພດ	**ເອກະສານລາຍງານການເງິນ ແບບລວມ**		**ເອກະສານລາຍງານການເງິນ ແບບແຍກ**	
		30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017
		(ລ້ານກີບ)		*(ລ້ານກີບ)*	
ນ້ຳບີ	ບໍລິສັດລູກ	-	-	455.471	363.668
ອີດີແອ-ເຈັນ ໂຊ່ລ່າ	ບໍລິສັດລູກ	-	-	341.910	301.294
ນ້ຳຄານ 3	ຊັບສິນ	322.894	315.416	322.894	315.416
ນ້ຳຈຽນ 1	ຊັບສິນ	678.504	678.504	678.504	678.504
ນ້ຳຫີນບູນ	ຊັບສິນ	205.955	205.955	205.955	205.955
ເຊເສັດ 3	ຊັບສິນ	149.418	149.418	149.418	149.418
ນ້ຳງື່ມ 1 Ext DFE	ຊັບສິນ	488.494	488.494	488.494	488.494
ນ້ຳງື່ມ 1 Ext Unit 6	ຊັບສິນ	242.231	242.231	242.231	242.231
ນ້ຳອູ 2,5,6	IPP	364.640	364.640	364.640	364.640
ນ້ຳໆງບ 2	IPP	111.470	111.470	111.470	111.470
ນ້ຳແບ່ງ	IPP	18.162	42.138	18.162	42.138
ເຊຊະໝານ 3	IPP	232.163	232.163	232.163	232.163
ນ້ຳລີກ 1	IPP	34.680	34.680	34.680	34.680
ນ້ຳມັ່ງ 1	IPP	37.596	37.596	37.596	37.596
ນ້ຳທາ 1	IPP	244.474	244.474	244.474	244.474
ໄຊຍະບູລີ	IPP	683.964	683.964	683.964	683.964
ດອນສະໂຮ່ງ	IPP	-	605.016	-	605.016
ລວມ		**3.814.645**	**4.436.159**	**4.612.026**	**5.101.121**

ສັນຍາການໂອນຮຸ້ນ ("ສັນຍາ") ຂອງບໍລິສັດ ໄຟຟ້າ ນ້ຳແບ່ງ ຈຳກັດ

ໃນວັນທີ 26 ມິນາ 2018, ບໍລິສັດ ແລະ ຟຟລ ໄດ້ລົງນາມໃນສັນຍາ ສຳລັບການໂອນຮຸ້ນໃນບໍລິສັດ ໄຟຟ້າ ນ້ຳແບ່ງ ຈຳກັດ.

ພາຍໃຕ້ສັນຍານີ້ ຟຟລ ເຫັນດີທີ່ຈະໂອນຮຸ້ນ 10% ໃນບໍລິສັດ ນ້ຳແບ່ງ ພາວເວີ ຈຳກັດ ໃຫ້ກັບບໍລິສັດ ໃນຈຳນວນ 2,3 ລ້ານໂດລາ ຫຼື ທຽບເທົ່າ 18.162 ລ້ານກີບ, ຫຼັງຈາກຫັກລົບກັບເງິນລົງທຶນຈ່າຍລ່ວງໜ້າ, ຟຟລ ຈະຕ້ອງຈ່າຍເງິນຄືນໃຫ້ ບໍລິສັດ ເປັນຈຳນວນ 2,9 ລ້ານໂດລາ ທຽບເທົ່າ 23.976 ລ້ານກີບ. ການຈັດການວຽກງານເອກະສານທີ່ກ່ຽວຂ້ອງຄາດວ່າ ຈະສຳເລັດໃນປີ 2018.

ສັນຍາການໂອນຮຸ້ນ ("ສັນຍາ") ຂອງບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ ແລະ ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ.

ໃນວັນທີ 11 ມິຖຸນາ 2018, ບໍລິສັດ ແລະ ຟຟລ ໄດ້ເຊັນສັນຍາການໂອນຮຸ້ນໃນບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ ແລະ ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ.

ພາຍໃຕ້ສັນຍາການໂອນຮຸ້ນ, ຟຟລ ໄດ້ຕົກລົງໂອນຮຸ້ນຈຳນວນ 20% ຂອງບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ ແລະ 20% ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ ໃຫ້ບໍລິສັດ ໃນມູນຄ່າ 450 ລ້ານໂດລາ. ໃນວັນທີ 30 ມິຖຸນາ 2018, ບໍລິສັດໄດ້ ຈ່າຍເງິນຈຳນວນ 156 ລ້ານໂດລາ ແລະ ຮຸ້ນໃນບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດໄດ້ຖືກໂອນໃຫ້ກັບບໍລິສັດແລ້ວ ເປີດເຜີຍໃນບົດອະທິບາຍ 5. ສ່ວນທີ່ເຫຼືອ ຈຳນວນ 84 ລ້ານໂດລາ ຫຼື ທຽບເທົ່າ 683.964 ລ້ານກີບ ໄດ້ນ□າສະເໜີເປັນ ເງິນລົງທຶນຈ່າຍລ່ວງໜ້າ ໃນບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ.

7 ຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	2018	2017	2018	2017
		(ລ້ານກີບ)		
ວັນທີ 1 ມັງກອນ	9.790.198	9.435.337	9.408.829	9.412.504
ເພີ່ມຂຶ້ນ	288.447	233.798	224.271	166.137
ຫັກຄ່າຫຼ້ຍຫ້ຽນ	(225.469)	(203.855)	(206.721)	(203.355)
ວັນທີ 30 ມິຖຸນາ	**9.853.176**	**9.465.280**	**9.426.379**	**9.375.286**

8 ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ

		ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	ບົດອະທິບາຍ	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ 2018	31 ທັນວາ 2017
			(ລ້ານກີບ)		
ໜີ້ຕ້ອງຮັບການຄ້າຈາກພາກສ່ວນທີ່ກ່ຽວຂ້ອງ	*15*	567.341	142.172	563.407	137.316
ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ	*15*	-	2.140	488	2.142
ອື່ນໆ		8.855	5.140	3.410	5.140
ລວມ		**576.196**	**149.452**	**567.305**	**144.598**

9 ເງິນກູ້ຢືມໄລຍະຍາວ

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ມິຖຸນາ 2018	31 ທັນວາ 2017
	(ລ້ານກີບ)	
ເງິນກູ້ຢືມໄລຍະສັ້ນ	951.972	870.573
ເງິນກູ້ຢືມໄລຍະຍາວ – ຈັດເປັນໄລຍະສັ້ນ		
– ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	449.834	442.848
– ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ	112.533	87.064
ລວມໜີ້ສິນທີ່ມີພາລະດອກເບ້ຍ ໄລຍະສັ້ນ	**1.514.339**	**1.400.485**
ເງິນກູ້ຢືມໄລຍະຍາວ – ຈັດເປັນໄລຍະຍາວ		
– ເງິນກູ້ຢືມໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	3.542.817	3.710.946
– ເງິນກູ້ຢືມໄລຍະຍາວ ຈາກສະຖາບັນການເງິນ	391.494	499.590
ຫັກ: ຕົ້ນທຶນຄ່າທຳນຽມເງິນກູ້ລໍຖ້າຕັດບັນຊີ	(4.981)	(4.188)
ລວມໜີ້ສິນທີ່ມີພາລະດອກເບ້ຍ ໄລຍະຍາວ	**3.929.330**	**4.206.348**
ລວມໜີ້ສິນທີ່ມີພາລະດອກເບ້ຍ	**5.443.669**	**5.606.833**

ການເຄື່ອນໄຫວໃນໜີ້ສິນທີ່ມີພາລະດອກເບ້ຍ ສຳລັບໄລຍະເວລາຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2018 ແລະ 2017 ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
ໄລຍະເວລາຫົກເດືອນສິ້ນສຸດວັນທີ 30 ມິຖຸນາ	2018	2017
	(ລ້ານກີບ)	
ວັນທີ 1 ມັງກອນ	5.606.833	1.058.783
ເພີ່ມຂຶ້ນ	439.545	3.970.076
ຈ່າຍເງິນຄືນ	(686.824)	(262.963)
ຜົນກະທົບຈາກການແລກປ່ຽນເງິນຕາ	84.908	41.520
ປ່ຽນແປງສຸດທິໃນຕົ້ນທຶນເງິນກູ້ລໍຖ້າຕັດບັນຊີ	(793)	(2.359)
ວັນທີ 30 ມິຖຸນາ	**5.443.669**	**4.805.057**

ສັນຍາກູ້ຍືມໄລຍະສັ້ນ

ໃນລະຫວ່າງໄລຍະເວລາຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2018, ບໍລິສັດໄດ້ຮັບເງິນກູ້ເພີ່ມຈາກ ທະນາຄານ ຫວຽດຕິນ ລາວ ຈຳກັດ ເປັນຈຳນວນ 12,83 ລ້ານໂດລາ ຫຼື ທຽບເທົ່າ 107.105 ລ້ານກີບ.

ສັນຍາເງິນກູ້ຍືມໄລຍະຍາວ

ໃນວັນທີ 20 ທັນວາ 2017, ບໍລິສັດໄດ້ເຊັນສັນຍາສິນເຊື່ອກັບທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂາ ນະຄອນຫຼວງວຽງຈັນ ("ICBC") ສຳລັບສິນເຊື່ອ ຈຳນວນ 40 ລ້ານໂດລາ ເພື່ອໃຊ້ເປັນເງິນທຶນໝຸນວຽນເພີ່ມເຕີມ. ເງິນ ກູ້ຍືມ ນີ້ມີອັດຕາດອກເບ້ຍ LIBOR 6 ເດືອນ +3,20% ຊຶ່ງປະກອບດ້ວຍວົງເງິນທີ 1 ຈຳນວນ 30 ລ້ານໂດລາ ແລະ ວົງເງິນທີ 2 ຈຳນວນ 10 ລ້ານໂດລາ. ເມື່ອວັນທີ 2 ມັງກອນ 2018 ບໍລິສັດໄດ້ຮັບເງິນຈາກທັງວົງເງິນ 1 ແລະ 2 ເປັນ ຈຳນວນເງິນລວມ 40 ລ້ານໂດລາ ທຽບເທົ່າ 332.440 ລ້ານກີບ ແລະ ຈະຄົບສັນຍາເງິນກູ້ພາຍໃນ 3 ປີ ຫຼັງຈາກ ຖອນເງິນ.

ເງິນກູ້ຢືມໄລຍະຍາວ ນະວັນທີ 30 ມິຖຸນາ 2018 ແລະ 31 ທັນວາ 2017 ມີສະກຸນເງິນຕາຕ່າງປະເທດ ດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ມິຖຸນາ 2018	31 ທັນວາ 2017
	(ລ້ານກີບ)	
ໂດລາສະຫາລັດ	4.288.870	4.523.237
ເອີໂຣ	164.211	168.185
ເຢັນຍີ່ປຸ່ນ	38.616	44.838
ລວມ	**4.491.697**	**4.736.260**

ການວິເຄາະອາຍຸຂອງເງິນກູ້ຢືມ ດັ່ງກ່າວມີດັ່ງຕໍ່ໄປນີ້:

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ມິຖຸນາ 2018	31 ທັນວາ 2017
	(ລ້ານກີບ)	
ພາຍໃນ 1 ປີ	562.367	529.912
ຫຼາຍກວ່າ 1 ປີ ແຕ່ໜ້ອຍກວ່າ 5 ປີ	1.851.157	1.965.362
ຫຼາຍກວ່າ 5 ປີ	2.078.173	2.240.986
ລວມ	**4.491.697**	**4.736.260**

10 ຮຸ້ນກູ້

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ມິຖຸນາ 2018	31 ທັນວາ 2017
	(ລ້ານກີບ)	
ຮຸ້ນກູ້	4.317.300	4.222.933
ຕົ້ນທຶນທາງການເງິນລໍຖ້າຕັດບັນຊີ	(66.701)	(70.051)
ສຸດທິ	**4.250.599**	**4.152.882**

ການເຄື່ອນໄຫວໃນຮຸ້ນກູ້ ສຳລັບໄລຍະເວລາ ຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2018 ແລະ 2017 ມີດັ່ງຕໍ່ໄປນີ້:

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	2018	2017
	(ລ້ານກີບ)	
ໃນວັນທີ 1 ມັງກອນ	4.152.882	3.985.936
ຕັດຈຳໜ່າຍຕົ້ນທຶນທາງການເງິນລໍຖ້າຕັດຈ່າຍ	3.350	1.677
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	94.367	108.316
ໃນວັນທີ 30 ມິຖຸນາ	**4.250.599**	**4.095.929**

ສັງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນ ຂອງການອອກຮຸ້ນກູ້ ໃນລະຫວ່າງໄຕມາດສາມຂອງປີ 2016 ໄດ້ລະບຸໄວ້ໃນ ຕາມຕະລາງ ດັ່ງລຸ່ມນີ້:

ລາຍການ	**ຮູບແບບ 1**	**ຮູບແບບ 2**	**ຮູບແບບ 3**
ປະເພດ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ້ນກູ້ ໃນວັນທີ ຄົບກຳນົດ.
ລວມລາຄາທີ່ສະເໜີ	51.000 ລ້ານໂດລາ	166.000 ລ້ານໂດລາ	95.000 ລ້ານໂດລາ
ຈຳນວນທີ່ອອກ	51.000 ໜ່ວຍ	166.000 ໜ່ວຍ	95.000 ໜ່ວຍ
ອັດຕາດອກເບ້ຍ	ຄົງທີ່ 5% ຕໍ່ປີ	ຄົງທີ່ 5,59% ຕໍ່ປີ	ຄົງທີ່ 5,98% ຕໍ່ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,24% ຕໍ່ປີ	5,85% ຕໍ່ປີ	6,26% ຕໍ່ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ	ສອງຄັ້ງຕໍ່ປີ, ວັນທີ 2 ມີນາ ແລະ 2 ກັນຍາ
ອາຍຸ	7 ປີ	10 ປີ	12 ປີ
ວັນທີ ຄົບກຳນົດ	2 ກັນຍາ 2023	2 ກັນຍາ 2026	2 ກັນຍາ 2028

ສັງລວມຂໍ້ກຳນົດ ແລະ ເງື່ອນໄຂທີ່ສຳຄັນ ຂອງການອອກຮຸ້ນກູ້ ໃນປີ 2014 ໄດ້ລະບຸໄວ້ໃນຕາມຕະລາງ ດັ່ງລຸ່ມນີ້:

ລາຍການ	ຮຸ່ນແບບ 1	ຮຸ່ນແບບ 2	ຮຸ່ນແບບ 3
ປະເພດ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ	ຮຸ້ນກູ້ທີ່ບໍ່ມີສິດ ແລະ ຫຼັກຊັບຄ້ຳປະກັນ
ການຈ່າຍຄືນ	ຈ່າຍຄືນ ເງິນຕົ້ນຮຸ່ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ່ນກູ້ ໃນວັນທີ ຄົບກຳນົດ.	ຈ່າຍຄືນ ເງິນຕົ້ນຮຸ່ນກູ້ ໃນວັນທີ ຄົບກຳນົດ.
ລວມລາຄາທີ່ສະເໜີ	1.500 ລ້ານບາດ	2.000 ລ້ານບາດ	3.000 ລ້ານບາດ
ຈຳນວນທີ່ອອກ	1.500.000 ໜ່ວຍ	2.000.000 ໜ່ວຍ	3.000.000 ໜ່ວຍ
ອັດຕາດອກເບ້ຍ	ຄົງທີ່ 4,95% ຕໍ່ປີ	ຄົງທີ່ 5,20% ຕໍ່ປີ	ຄົງທີ່ 5,45% ຕໍ່ປີ
ອັດຕາດອກເບ້ຍທີ່ແທ້ຈິງ	5,26% ຕໍ່ປີ	5,54% ຕໍ່ປີ	5,82% ຕໍ່ປີ
ກຳນົດຈ່າຍດອກເບ້ຍ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ	ສອງຄັ້ງຕໍ່ປີ, ວັນທີ 12 ມິຖຸນາ ແລະ 12 ທັນວາ
ອາຍຸ	5 ປີ	7 ປີ	10 ປີ
ວັນທີ ຄົບກຳນົດ	12 ທັນວາ 2019	12 ທັນວາ 2021	12 ທັນວາ 2024

11 ການສ່ວນອະນຸພັນ

(ກ) ສັນຍາແລກປ່ຽນເງິນຕາຕ່າງປະເທດ swap

	ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	30 ມິຖຸນາ 2018	31 ທັນວາ 2017
	(ລ້ານກີບ)	
ໜີ້ຕ້ອງສິ່ງສັນຍາແລກປ່ຽນເງິນຕາ	1.667.477	1.642.584
ໜີ້ຕ້ອງຮັບສັນຍາແລກປ່ຽນເງິນຕາ	(1.671.800)	(1.650.805)
ສ່ວນຕ່າງກຳໄລສັນຍາແລກປ່ຽນເງິນຕາ	10.847	12.077
ສຸດທິ	**6.524**	**3.856**

ສັງລວມເງື່ອນໄຂຂອງສັນຍາແລກປ່ຽນເງິນຕາຕ່າງປະເທດ ທີ່ສຳຄັນ ມີດັ່ງນີ້:

ລຳດັບ	ຈຳນວນທີ່ອອກຮຸ້ນກູ້ (ລ້ານບາດ)	Swap ຈຳນວນ (ລ້ານໂດລາ)	ໄລຍະການຊຳລະເງິນ	ອັດຕາເດີມ	ອັດຕາ Swap	ໄລຍະການຊຳລະເງິນ
1	1.500	45,59	ທັນວາ 2019	4,95%	Libor 6 ເດືອນ+3,36%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ມິຖຸນາ 2015 ເຖິງ ທັນວາ 2019
2	2.000	60,79	ທັນວາ 2021	5,20%	Libor 6 ເດືອນ+3,61%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ມິຖຸນາ 2015 ເຖິງ ທັນວາ 2021
3	3.000	91,18	ທັນວາ 2024	5,45%	Libor 6 ເດືອນ+3,795%	ສອງຄັ້ງຕໍ່ປີ ໂດຍເລີ່ມຈາກ ມິຖຸນາ 2015 ເຖິງ ທັນວາ 2024

(ຂ) ສັນຍາແລກປ່ຽນອັດຕາດອກເບ້ຍ collar

ໃນລະຫວ່າງປີ 2017, ບໍລິສັດໄດ້ເຮັດສັນຍາປ້ອງກັນຄວາມສ່ຽງຈາກອັດຕາດອກເບ້ຍ collar ກັບ ສະຖາບັນ ການເງິນໄທ. ໂດຍມີຈຸດປະສົງ ເພື່ອບໍລິຫານຄວາມສ່ຽງ ຈາກຄວາມຜັນຜວນ ຂອງອັດຕາດອກເບ້ຍ ຂອງຮຸ້ນກູ້. ໂດຍມີວົງເງິນບໍ່ເກີນ 198 ລ້ານໂດລາ ຫຼື ທຽບເທົ່າ 1.642.584 ລ້ານກີບ ຊຶ່ງມີອັດຕາດອກເບ້ຍ ອ້າງອີງຄື LIBOR 6 ເດືອນ ("LIBOR") ໂດຍບໍລິສັດຈະຈ່າຍ ແລະ ຮັບດອກເບ້ຍ ຕາມທີ່ລະບຸໄວ້ ໃນສັນຍາ ເປັນສອງຄັ້ງຕໍ່ປີ. ສັນຍາຈະໝົດອາຍຸລົງຈາກເດືອນ ທັນວາ 2019 ເຖິງ ທັນວາ 2021. ຄູ່ສັນຍາຮຽກຮ້ອງໃຫ້ບໍລິສັດຈ່າຍເງິນລ່ວງໜ້າ ຊຶ່ງຈະຊຳລະຕາມວັນທີ່ຊຳລະບັນຊີ.

12 ກຳໄລພື້ນຖານຕໍ່ຮຸ້ນ

ການຄຳນວນກຳໄລພື້ນຖານຕໍ່ຮຸ້ນ ສຳລັບໄລຍະເວລາຫົກເດືອນ ສິ້ນສຸດ ໃນວັນທີ 30 ມິຖຸນາ 2018 ແລະ 2017 ແມ່ນ ຄິດໄລ່ກຳໄລສຸດທິໃນຮອບເວລາທີ່ເປັນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ ແລະ ຈຳນວນຮຸ້ນສາມັນສະເລ່ຍທີ່ອອກຈຳໜ່າຍ ລະຫວ່າງ ໄລຍະເວລາ ດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	2018	2017	2018	2017
ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນ ຂອງບໍລິສັດ (ລ້ານກີບ)	92.683	129.663	95.390	130.239
ຈຳນວນຮຸ້ນສາມັນທີ່ອອກຈຳໜ່າຍ *(ລ້ານຮຸ້ນ)*	1.679	1.679	1.679	1.679
ກຳໄລພື້ນຖານຕໍ່ຮຸ້ນ *(ກີບ)*	**55,20**	**77,22**	**56,81**	**77,57**

13 ເງິນປັນຜົນ

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ, ຈັດຂຶ້ນໃນວັນທີ 6 ເມສາ 2018, ມີມັດຕິອະນຸມັດ ການຈ່າຍເງິນປັນຜົນ ລະຫວ່າງ ການປີ ສຳລັບຜົນກຳໄລສຸດທິ ສຳລັບຮອບໄລຍະເວລາ 1 ກໍລະກົດ ຫາ 31 ທັນວາ 2017 ເປັນຈຳນວນ 180 ກີບຕໍ່ຮຸ້ນ ລວມເປັນເງິນ ທັງໝົດ 302.275 ລ້ານກີບ. ເງິນປັນຜົນໄດ້ຖືກຈ່າຍໃນຊ່ວງເດືອນ ພຶດສະພາ 2018.

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ, ຈັດຂຶ້ນໃນວັນທີ 4 ເມສາ 2017, ມີມັດຕິອະນຸມັດ ການຈ່າຍເງິນປັນຜົນ ລະຫວ່າງ ການປີ ສຳລັບຜົນກຳໄລສຸດທິ ສຳລັບຮອບໄລຍະເວລາ 1 ກໍລະກົດ ຫາ 31 ທັນວາ 2016 ເປັນຈຳນວນ 160 ກີບຕໍ່ຮຸ້ນ ລວມເປັນເງິນ ທັງໝົດ 268.689 ລ້ານກີບ. ເງິນປັນຜົນໄດ້ຖືກຈ່າຍໃນຊ່ວງເດືອນ ເມສາ 2017.

14 ພາລະຜູກພັນກັບພາກສ່ວນທີ່ບໍ່ກ່ຽວຂ້ອງ

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	30 ມິຖຸນາ 2018	31 ທັນວາ 2017	30 ມິຖຸນາ	31 ທັນວາ
	(ລ້ານກີບ)			
ພາລະຜູກພັນກ່ຽວຂ້ອງກັບທຶນ				
ມີສັນຍາແຕ່ບໍ່ໄດ້ລະບຸ ສຳລັບ:				
ອອກແບບ,ກໍ່ສ້າງ ແລະ ຕິດຕັ້ງ ເຄື່ອງຈັກ ແລະ ອຸປະກອນ ແລະ ໂຄງການກໍ່ສ້າງ	2.386.776	2.500.879	276.776	483.555
ພາລະຜູກພັນຕາມສັນຍາເຊົ່າ ດຳເນີນງານທີ່ບໍ່ສາມາດ ຍົກເລີກໄດ້				
ພາຍໃນໜຶ່ງປີ	1.079	262	279	262
ຫຼາຍກວ່າໜຶ່ງປີ ແຕ່ບໍ່ເກີນຫ້າປີ	4.876	1.100	1.185	1.100
ຫຼາຍກວ່າຫ້າປີ	25.183	6.506	6.721	6.506
ລວມ	**31.138**	**7.868**	**8.185**	**7.868**

ສັນຍາການເຊົ່າທີ່ດິນ

ອີງຕາມເອກະສານແຈ້ງການ ຂອງສຳນັກງານນາຍົກເລກທີ 180 ລົງວັນທີ 13 ທັນວາ 2010 ອະນຸມັດໃຫ້ບໍລິສັດມີສິດ ນຳໃຊ້ທີ່ດິນ ເພື່ອການດຳເນີນກິດຈະການຜະລິດໄຟຟ້າ. ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບໍລິສັດກຳລັງຢູ່ໃນການສຳຫຼວດ ແລະ ຮ່າງສັນຍາເຊົ່າທີ່ດິນ. ຄ່າເຊົ່າຈະຖືກບັນທຶກ ເມື່ອທັງສອງຝ່າຍຕົກລົງເຫັນດີກ່ຽວ ກັບຂໍ້ກຳນົດ ແລະ ເງື່ອນໄຂສັນຍາເຊົ່າທີ່ດິນ.

ພາຍຫຼັງ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບໍລິສັດໄດ້ເຊັນສັນຍາເຊົ່າທີ່ດິນ (“ສັນຍາ”) ໃນ ວັນທີ 30 ມັງກອນ 2014. ອີງຕາມສັນຍາ, ບໍລິສັດມີສິດໃນການນຳໃຊ້ທີ່ດິນເກີນ 30 ປີ ສຳລັບການດຳເນີນທຸລະກິດ, ເລີ່ມຕົ້ນຈາກວັນທີທີ່ເຊັນສັນຍາ.

15 ພາກສ່ວນທີ່ກ່ຽວຂ້ອງ

ສຳລັບຈຸດປະສົງຂອງເອກະສານລາຍງານການເງິນເຫຼົ່ານີ້, ພາກສ່ວນທີ່ໄດ້ຮັບການພິຈາລະນາວ່າກ່ຽວຂ້ອງກັບກຸ່ມບໍລິສັດ, ຖ້າກຸ່ມບໍລິສັດມີຄວາມສາມາດ, ທາງກົງ ຫຼື ທາງອ້ອມ, ທີ່ຈະຄວບຄຸມ ຫຼື ເຂົ້າຮ່ວມຄວບຄຸມພາກສ່ວນ ຫຼື ການປະຕິບັດ ອິດທິພົນທີ່ສຳຄັນນອກເໜືອຈາກພາກສ່ວນໃນການສ້າງເອກະສານລາຍງານການເງິນ ແລະ ການຕັດສິນໃຈໃນການດຳເນີນງານ ຫຼື ນອກເໜືອໄປຈາກນີ້ ຫຼື ໃນກໍລະນີກຸ່ມບໍລິສັດ ແລະ ພາກສ່ວນຈະຢູ່ພາຍໃຕ້ການຄວບຄຸມດຽວກັນ ຫຼື ພາຍໃຕ້ອິດທິພົນທີ່ສຳຄັນ. ກິດຈະການທີ່ກ່ຽວຂ້ອງອາດຈະເປັນນິຕິບຸກຄົນ ຫຼື ສຳນັກງານຕ່າງໆ.

ຊື່ຂອງວິສາຫະກິດ	ສ້າງຕັ້ງຂຶ້ນໃນປະເທດ/ສັນຊາດ	ລັກສະນະຄວາມສຳພັນ
ລັດວິສາຫະກິດໄຟຟ້າລາວ	ສປປລາວ	ບໍລິສັດແມ່
ບໍລິສັດ ນ້ຳປີ ພາວເວີ ຈຳກັດ	ສປປລາວ	ບໍລິສັດລູກ
ບໍລິສັດ ອີດີແອ–ເຈັນ ໂຊລ່າ ພາວເວີ ຈຳກັດ	ສປປລາວ	ບໍລິສັດລູກ

ນະໂຍບາຍການກຳນົດລາຄາໂດຍສະເພາະການດຳເນີນງານສຳລັບແຕ່ລະລາຍການເປັນໄປດັ່ງນີ້:

ລາຍການ	ນະໂຍບາຍລາຄາ
ຂາຍກະແສໄຟຟ້າ	ລາຄາຕາມສັນຍາ
ລາຍຈ່າຍດອກເບ້ຍ	ອັດຕາດອກເບ້ຍຕາມສັນຍາ
ລາຍຮັບດອກເບ້ຍ	ອັດຕາດອກເບ້ຍຕາມສັນຍາ

ລາຍການເຄື່ອນໄຫວທີ່ສຳຄັນສຳລັບໄລຍະເວລາຫົກເດືອນ ສິ້ນສຸດວັນທີ 30 ມິຖຸນາ 2018 ແລະ 2017 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	2018	2017	2018	2017
		(ລ້ານກີບ)		
ບໍລິສັດແມ່				
ຂາຍກະແສໄຟຟ້າ	515.497	574.566	506.472	573.305
ລາຍຈ່າຍດອກເບ້ຍ	101.329	168.920	101.329	168.920
ລາຍຮັບດອກເບ້ຍ	10.650	526	10.650	526

ຍອດຄົງເຫຼືອໃນວັນທີ 30 ມິຖຸນາ 2018 ແລະ 31 ທັນວາ 2017 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນ ແບບລວມ		**ເອກະສານລາຍງານການເງິນ ແບບແຍກ**	
	2018	2017	2018	2017
		(ລ້ານກີບ)		
ເງິນຈ່າຍລ່ວງໜ້າສຳລັບຊັບສິນ ທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	3.783.248	4.398.656	3.783.248	4.398.656
ບໍລິສັດລູກ				
ບໍລິສັດ ນ້ຳປີ ພາວເວີ ຈຳກັດ	-	-	455.470	363.668
ບໍລິສັດ ອີດີແອວ–ເຈັນ ໂຊ່ລ່າ ພາວເວີ ຈຳກັດ	-	-	341.911	301.295
	3.783.248	**4.398.656**	**4.580.629**	**5.063.619**
ເງິນກູ້ໄລຍະສັ້ນກັບພາກສ່ວນທີ່ ກ່ຽວຂ້ອງ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	394.941	463.392	394.941	463.392
ໜີ້ຕ້ອງຮັບທາງຄ້າ ແລະ ອື່ນໆ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	567.341	144.312	563.407	138.970
ບໍລິສັດລູກ				
ບໍລິສັດ ນ້ຳປີ ພາວເວີ ຈຳກັດ	-	-	488	488
ລວມ	**567.341**	**144.312**	**563.895**	**139.458**

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	2018	2017	2018	2017
		(ລ້ານກີບ)		
ເງິນກູ້ຢືມໄລຍະຍາວ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ				
– ເງິນກູ້ຢືມໄລຍະສັ້ນ	449.834	442.848	449.834	442.848
– ເງິນກູ້ຢືມໄລຍະຍາວ	3.542.817	3.710.946	3.542.817	3.710.946
ລວມ	**3.992.651**	**4.153.794**	**3.992.651**	**4.153.794**

ສັນຍາສຳຄັນຕ່າງໆກັບພາກສ່ວນທີ່ກ່ຽວຂ້ອງ

ສັນຍາສຳປະທານ ("CA")

ໃນວັນທີ 15 ທັນວາ 2010, ບໍລິສັດ ໄດ້ເຮັດສັນຍາສຳປະທານ ເຊິ່ງມີການແກ້ໄຂສັນຍາສຳປະທານ ("CA") ໃນວັນທີ 24 ກໍລະກົດ 2013, ກັບລັດຖະບານຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ລັດຖະບານ") ເຊິ່ງຕາງໜ້າໂດຍກະຊວງ ແຜນການ ແລະ ການລົງທຶນ ("MPI"). ສັນຍາສ□ປະທານແມ່ນໄດ້ກຳນົດໃຫ້ເວລາສຳປະທານ 30 ປີ ແລະ ສາມາດຕໍ່ອາຍຸສຳປະທານໄດ້ອີກ 10 ປີ ສຳລັບໂຄງການໂຮງໄຟຟ້າ ຄືດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍຂໍ້1(ຂ). ເມື່ອສິ້ນສຸດໄລຍະເວລາສຳປະທານແລ້ວ, ບໍລິສັດຈະຕ້ອງໂອນກຳມະສິດ ແລະ ຜົນປະໂຫຍດຂອງໂຄງການ ລວມທັງ ຊັບສິນຕ່າງໆ ທີ່ຄອບຄອງ ໂດຍບໍລິສັດ ໃນການດຳເນີນງານ ໃຫ້ແກ່ລັດຖະບານ ຫຼື ຜູ້ຕາງໜ້າໂດຍບໍ່ມີຄ່າໃຊ້ຈ່າຍໃດໆ ດັ່ງທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານ.

ພາຍໃຕ້ສັນຍາສຳປະທານນີ້, ລັດຖະບານຍິນຍອມໃຫ້ບໍລິສັດມີສິດພຽງແຕ່ຜູ້ດຽວ ໃນຊ່ວງໄລຍະເວລາໃນການສຳປະທານ. ສິດທິສຳຄັນພາຍໃຕ້ສັນຍາສຳປະທານລວມມີ 1) ສິດເປັນເຈົ້າຂອງດຳເນີນງານ ແລະ ບຳລຸງຮັກສາສິ່ງອຳນວຍຄວາມສະດວກ ຂອງ ໂຄງການ ແລະ ຊັບສິນບັດອື່ນໆ ຫຼື ຊັບສິນທີ່ບໍລິສັດໄດ້ມາ, 2) ສິດນຳໃຊ້ເຂື່ອນ, ສັນຍາເຂື່ອນ ແລະ ແມ່ນ້ຳ 3) ສິດໃນການຂາຍໄຟຟ້າໃຫ້ກັບລັດວິສະຫະກິດໄຟຟ້າລາວ, 4) ເສຍອາກອນກຳໄລ 10%. 5) ຄ່າທຳນຽມ (ຄ່າພາກຫຼວງ) 1% ຈາກຍອດຂາຍກະແສໄຟຟ້າ.

ນອກຈາກນີ້, ບໍລິສັດ ໄດ້ຖືກຮຽກຮ້ອງໃຫ້ປະຕິບັດ ຕາມຫຼາຍຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ເຊິ່ງລວມມີຢູ່ໃນສັນຍາ ສຳປະທານ ສະບັບນີ້, ແຕ່ບໍ່ຈຳກັດການກໍ່ສ້າງ, ການປະກອບທຶນ, ຄ່າພາກຫຼວງ, ສຸຂະພາບ ແລະ ຄວາມປອດໄພ, ອາກອນ ແລະ ຄ່າເຊົ່າທີ່ດິນ, ອາກອນມູນຄ່າເພີ່ມ ("ອມພ") ໃນສ່ວນຂອງອຸປະກອນໄຟຟ້າ ທີ່ເຮັດໃຫ້ ຟຟລ.

ບົດບັນທຶກຄວາມເຂົ້າໃຈ ໃນການຊື້–ຂາຍໄຟຟ້າຂອງເຂື່ອນໄຟຟ້ານ້ຳຄານ 2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ("MOU")

ໃນລະຫວ່າງປີ 2016, ບໍລິສັດ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ ຟຟລ ສຳລັບການຊື້–ຂາຍໄຟຟ້າຈາກເຂື່ອນໄຟຟ້ານ້ຳຄານ 2, ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ໃນດ້ານລາຄາ, ຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆທີ່ໄດ້ກຳນົດໄວ້ໃນບົດບັນທຶກ. ບໍລິສັດມີສິດໃນການຈຳໜ່າຍກະແສໄຟຟ້າໃຫ້ກັບ ຟຟລ ກ່ອນວັນລົງນາມໃນບົດບັນທຶກ.

ສັນຍາການຮັບຊື້ໄຟຟ້າ ສຳລັບໂຄງການເຫຼົ່ານີ້ຂະນະນີ້ແມ່ນຢູ່ໃນຂັ້ນຕອນການຂໍອະນຸມັດ.

ບົດບັນທຶກຄວາມເຂົ້າໃຈສຳລັບໂຄງການ ພະລັງງານແສງຕາເວັນ ("MOU")

ໃນວັນທີ 15 ມັງກອນ 2016, ບໍລິສັດລູກໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ ຟຟລ ສຳລັບໂຄງການ ອີດີແອວ-ເຈັນ ໂຊ່ ລາ ພາວເວີ້ ("ໂຄງການ"). ຕາມບົດບັນທຶກຄວາມເຂົ້າໃຈ, ຟຟລ ຕົກລົງໃຫ້ການສະໜັບສະໜູນໂຄງການໂດຍການຊື້ໄຟຟ້າຈາກໂຄງການທີ່ມີກຳລັງຕິດຕັ້ງ 100 MW ເປັນໄລຍະເວລາ 25 ປີ ພາຍໃຕ້ເງື່ອນໄຂທີ່ກຳນົດໃນບົດບັນທຶກຄວາມເຂົ້າໃຈ.

ສັນຍາການຮັບຊື້ໄຟຟ້າ ສຳລັບໂຄງການເຫຼົ່ານີ້ຂະນະນີ້ແມ່ນຢູ່ໃນຂັ້ນຕອນການຂໍອະນຸມັດ.

ສັນຍາການຮັບຊື້ໄຟຟ້າ ("PPA")

ໃນວັນທີ 15 ທັນວາ 2010 ແລະ ດັດແກ້ໃນວັນທີ 9 ທັນວາ 2011 ບໍລິສັດ ໄດ້ເຮັດສັນຍາຊື້–ຂາຍ ໄຟຟ້າ ("PPA") ກັບ ຟຟລ, ສັນຍາດັ່ງກ່າວ ມີໄລຍະເວລາ 30 ປີ ແລະ ສາມາດຕໍ່ອາຍຸໄດ້ 10 ປີ ຄືກັນກັບສັນຍາສຳປະທານ.

ລາຍຮັບຕົ້ນຕໍຂອງບໍລິສັດແມ່ນການຂາຍກະແສໄຟຟ້າ ໃຫ້ ຟຟລ ຕາມສັນຍາ ຊື້–ຂາຍໄຟຟ້າ ທີ່ຜະລິດຈາກຊັບສິນທີ່ມີຢູ່, ກະແສໄຟຟ້າທີ່ຂາຍ ແມ່ນຂຶ້ນກັບອັດຕາຄ່າໄຟຟ້າ ທີ່ໄດ້ຕົກລົງກັນ ເຊິ່ງກຳນົດໄວ້ໃນສັນຍາ ຊື້–ຂາຍ ໄຟຟ້າສຳລັບແຕ່ ລະຊັບສິນທີ່ໃຊ້ໃນການຜະລິດໄຟຟ້າ.

ພາຍໃຕ້ສັນຍາຊື້-ຂາຍ ສະບັບນີ້, ບໍລິສັດມີພັນທະຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂດັ່ງຕໍ່ໄປນີ້: 1) ຮັບຜິດຊອບໃນການດຳເນີນງານ ແລະ ບຳລຸງຮັກສາກຳລັງການຜະລິດ ພາຍໃຕ້ການດຳເນີນງານ ປົກກະຕິ ທີ່ໄດ້ຕົກລົງ ໄວ້ ຕະຫຼອດໄລຍະຂອງສັນຍາການຊື້-ຂາຍໄຟຟ້າ, 2) ບໍ່ໃຫ້ພາກສ່ວນທີສາມມີສິດໃນການສະໜອງ ຫຼື ໃຊ້ພະລັງງານ ໄຟຟ້າ ຈາກສິ່ງອຳນວຍຄວາມສະດວກໃດໆ ໃນຕະຫຼອດໄລຍະເວລາ ສັນຍາ ຊື້-ຂາຍໄຟຟ້າ, 3) ມີພັນທະວາງແຜນການ ຜະລິດໄຟຟ້າ ຈາກສະຖານີ ຫຼື ຕາໜ່າຍໄຟຟ້າຂອງ ຟຟລ ກ່ອນການຕົກລົງຊື້-ຂາຍໄຟຟ້າໃນແຕ່ລະປີ, 4) ເກັບເງິນຈາກ ຟຟລ ຈາກການຈຳໜ່າຍກະແສໄຟຟ້າສຸດທິ, 5) ຟຟລ ສາມາດແບ່ງຊຳລະເປັນພຸດ ແລະ ຫັກທົດແທນກັບເງິນປັນຜົນ ຕ້ອງຈ່າຍທີ່ປະກາດໂດຍບໍລິສັດໃນແຕ່ລະປີ, 6) ເຫັນດີສະໜອງຄວາມສະດວກ ໃນການສະໜອງໄຟຟ້າໃຫ້ ຟຟລ ບໍ່ຕ່ຳກວ່າ 90% ທີ່ໄດ້ແຈ້ງໄວ້ໂດຍລວມຂອງການຜະລິດໄຟຟ້າທັງໝົດ ຂອງການສົ່ງກະແສໄຟຟ້າ ແລະ ການລົ້ມແຫຼວ ຂອງຜົນຜະລິດໄຟຟ້າ ຟຟລ ໄດ້ຕົກລົງຊື້ຈາກບໍລິສັດ ບໍ່ຕ່ຳກວ່າ 90%, 7) ຖ້າຫາກວ່າ ອັດຕາແລກປ່ຽນຕາມທີ່ຕົກລົງ ໃນສັນຍາມີການປ່ຽນແປງບໍລິສັດທັງສອງສາມາດຕົກລົງອັດຕາຄ່າກະແສໄຟຟ້າ ຄືນໃໝ່.

ໃນວັນທີ 7 ພະຈິກ 2016 ແລະ ສະບັບປັບປຸງໃໝ່ໃນວັນທີ 28 ມີນາ 2017,ບໍລິສັດໄດ້ເຮັດສັນຍາຊື້ຂາຍພະລັງງານ ກັບ ຟຟລ, ສຳລັບການໂອນຊັບສິນຂອງເຂື່ອນໄຟຟ້ານ້ຳຊະນາ. ໃນສັນຍາຊື້ຂາຍພະລັງງານໄດ້ກຳນົດເປັນໄລຍະເວ ລາ 30 ປີ ພ້ອມດຽວກັນນັ້ນຍັງມີເງື່ອນໄຂການຂະຫຍາຍເວລາ ເພື່ອໃຫ້ສອດຄ່ອງຕາມເງື່ອນໄຂຂອງ CA.

ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການໂອນຊັບສິນ ຂອງໂຄງການນ້ຳຄານ 3 (ໂຄງການ)

ໃນວັນທີ 17 ກຸມພາ 2014, ບໍລິສັດ ແລະ ຟຟລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການມອບໂອນຊັບສິນຂອງ ໂຄງການ ນ້ຳຄານ 3. ອີງໃສ່ເງື່ອນໄຂໃນບົດບັນທຶກຄວາມເຂົ້າໃຈ, ຟຟລ ມີຈຸດປະສົງຈະໂອນບັນດາຊັບສິນທັງໝົດຂອງ ໂຄງການທີ່ກ່າວມາຂ້າງເທິງນັ້ນ ໃຫ້ກັບບໍລິສັດ ພາຍຫຼັງແຕ່ລະໂຄງການສຳເລັດການປະຕິບັດໂຄງການ ຫຼື ເລືອກເອົາວັນ ໃດໜຶ່ງຕາມທີ່ພາກສ່ວນກ່ຽວຂ້ອງໄດ້ຕົກລົງເຫັນດີເປັນເອກະພາບກັນ, ໂດຍພາຍໃຕ້ເງື່ອນໄຂທີ່ວ່າ: i) ບໍລິສັດເຫັນດີ ທີ່ ຈະຫົດແທນຄືນທຸກຄ່າໃຊ້ຈ່າຍໂດຍ ຟຟລ ຈົນເຖິງປະຈຸບັນ ຫຼື ກຳລັງເກີດຂຶ້ນອີກຈົນກວ່າຈະສຳເລັດ ແລະ ໂອນກຳມະ ສິດຂອງໂຄງການໃຫ້ກັບບໍລິສັດ; ii) ບໍລິສັດຈະຮັບຜິດຊອບຈ່າຍຄ່າຫົດແທນຄືນລາຍຈ່າຍ, ລາຍຈ່າຍລ່ວງໜ້າ, ລາຍ ຈ່າຍທີ່ສືບຕໍ່ຈ່າຍ ຫຼື ລາຍຈ່າຍທີ່ກຳລັງເກີດຂຶ້ນອີກໃຫ້ ຟຟລ ຕາມທີ່ສອງຝ່າຍໄດ້ຕົກລົງກັນໄວ້, ທຸກພັນທະທາງດ້ານ ການເງິນໃນຕໍ່ໜ້າຂອງ ຟຟລ ທີ່ກ່ຽວພັນກັບໂຄງການແມ່ນອາດຈະເກີດຂຶ້ນກັບການກຳນົດຕາມສັນຍາ, iii) ທັງສອງຝ່າຍ ມີການຕົກລົງໃນການຈັດການວຽກງານເອກະສານທີ່ກ່ຽວຂ້ອງ ໃຫ້ສຳເລັດພາຍໃນວັນທີ 31 ທັນວາ 2015, iv) ບໍລິສັດ ພິຈາລະນາຈະຈ່າຍໃຫ້ ຟຟລ ແມ່ນບໍ່ໃຫ້ເກີນ 18.13 ລ້ານໂດລາ. ຖ້າຫາກວ່າມີລາຍຈ່າຍທີ່ເພີ່ມຂຶ້ນຫຼາຍກວ່າ ຟຟລ ຮັບ ໄດ້, ບໍລິສັດຕ້ອງຈ່າຍພາກສ່ວນທີ່ເພີ່ມຂຶ້ນໃຫ້ກັບ ຟຟລ ພາຍໃຕ້ເງື່ອນໄຂທີ່ກຳນົດໃນບົດບັນທຶກຄວາມເຂົ້າ ໃຈ.

ບົດບັນທຶກຄວາມເຂົ້າໃຈ ກ່ຽວກັບການໂອນຊັບສິນ ຂອງໂຄງການ ບໍລິສັດ ນ້ຳອູ ພາວເວີ ຈຳກັດ

ໃນວັນທີ 19 ມັງກອນ 2015, ບໍລິສັດ ແລະ ຟຟລ ໄດ້ເຊັນບົດບັນທຶກຄວາມເຂົ້າໃຈສຳລັບການຖ່າຍໂອນຮຸ້ນ ໃນບໍລິສັດ ນ້ຳອູ ພາວເວີ ຈຳກັດ, ລວມເຖິງຊັບສິນຂອງໂຄງການນ້ຳອູ 2, 5 ແລະ 6.

ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ, ບໍລິສັດເຫັນດີໃນການຊຳລະເງິນຄືນທັງໝົດໃຫ້ ຟຟລ ສຳລັບທຸກລາຍຈ່າຍທີ່ ຟຟລ ຈ່າຍຜ່ານມາຈົນຮອດມື້ສຳເລັດໂຄງການບົນພື້ນຖານທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ຫຼື ຈົນກວ່າຈະສຳເລັດການໂອນຄວາມເປັນ ເຈົ້າຂອງ ຂອງໂຄງການເຊັ່ນດຽວກັນທາງບໍລິສັດ. ພ້ອມກັນນັ້ນບໍລິສັດຕ້ອງຊຳລະເງິນຄືນໃຫ້ ຟຟລ ຫຼື ຈ່າຍເງິນລ່ວງໜ້າ ໃຫ້ ຟຟລ ຕາມທີ່ທັງສອງຝ່າຍໄດ້ຕົກລົງເຫັນດີກັນຢ່າງຕໍ່ເນື່ອງ. ນອກຈາກນັ້ນ ຟຟລ ອາດມີພັນທະທາງດ້ານການເງິນ ກ່ຽວກັບໂຄງ ການດັ່ງກ່າວ ຕາມທີ່ລະບຸໃນສັນຍາ. ສອງຝ່າຍໄດ້ຕົກລົງເຫັນດີໃນລາຄາຂາຍເມື່ອມີການໂອນໂຄງການ. ບໍລິສັດຈະຕ້ອງຈ່າຍຈຳນວນເງິນທີ່ເຫຼືອຫຼັງຈາກທີ່ຫັກຈາກເງິນລ່ວງໜ້າໃຫ້ ຟຟລ

ບົດບັນທຶກຄວາມເຂົ້າໃຈ (MOU) ສຳລັບການໂອນຊັບສິນ ແລະ ຮຸ້ນ ຂອງຜູ້ຜະລິດພະລັງງານໄຟຟ້າເອກະລາດ (IPPs)

ໃນວັນທີ 12 ມິຖຸນາ 2015, ບໍລິສັດໄດ້ເຊັນບົດບັນທຶກຄວາມເຂົ້າໃຈກັບ ຟຟລ ສຳລັບການໂອນຊັບສິນ ແລະ ຮຸ້ນ ດັ່ງລຸ່ມນີ້:

ລຳດັບ	ຊື່ໂຄງການ	ທີ່ຕັ້ງ	ສ່ວນຖືຄອງຮຸ້ນ	MW
ຊັບສິນ				
1	ນ້ຳຈຽນ 1	ຊຽງຂວາງ	100%	104
2	ນ້ຳຫີນບູນ	ຄຳມ່ວນ	100%	30
3	ເຊເສັດ 3	ຈຳປາສັກ	100%	24
4	ນ້ຳງື່ມ 1 Ext DFE	ວຽງຈັນ	100%	80
5	ນ້ຳງື່ມ 1 Ext Unit 6	ວຽງຈັນ	100%	40
	ລວມ			**278**
ຮຸ້ນ IPPs				
1	ນ້ຳງຽບ 2	ຊຽງຂວາງ	10%	18
2	ນ້ຳແບ່ງ	ອຸດົມໄຊ	20%	6,8
3	ເຊຂະໝານ 3	ເຊກອງ	15%	37,5
4	ນ້ຳລີກ 1	ວຽງຈັນ	10%	6
5	ນ້ຳມັງ 1	ບໍລິຄຳໄຊ	10%	6,4
6	ນ້ຳທາ 1	ຫຼວງນ້ຳທາ ບໍ່ແກ້ວ	20%	33,6
	ລວມ			**108,3**

ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ, ບໍລິສັດເຫັນດີໃນການຊຳລະເງິນຄືນທັງໝົດໃຫ້ ຟຟລ ສຳລັບທຸກລາຍຈ່າຍທີ່ ຟຟລ ຈ່າຍຜ່ານມາຈົນຮອດມື້ສຳເລັດໂຄງການບົນພື້ນຖານທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ຫຼື ຈົນກວ່າຈະສຳເລັດ ການໂອນຄວາມເປັນເຈົ້າຂອງຂອງໂຄງການເຊັ່ນດຽວກັນທາງບໍລິສັດ. ພ້ອມກັນນັ້ນບໍລິສັດຕ້ອງຊຳລະເງິນຄືນໃຫ້ ຟຟລ ຫຼື ຈ່າຍເງິນລ່ວງໜ້າໃຫ້ ຟຟລ ຕາມທີ່ທັງສອງຝ່າຍໄດ້ຕົກລົງເຫັນດີກັນຢ່າງຕໍ່ເນື່ອງ. ນອກຈາກນັ້ນ ຟຟລ ອາດມີພັນທະທາງດ້ານການເງິນ ກ່ຽວກັບໂຄງການ ດັ່ງກ່າວຕາມທີ່ລະບຸໃນສັນຍາ. ສອງຝ່າຍໄດ້ຕົກລົງເຫັນດີໃນລາຄາຂາຍເມື່ອມີການໂອນໂຄງ ການ ແລະ ບໍລິສັດຈະຕ້ອງຈ່າຍຈຳນວນເງິນທີ່ເຫຼືອຫັງ ຈາກທີ່ຫັກຈາກເງິນລ່ວງໜ້າໃຫ້ ຟຟລ.

ການໂອນພະນັກງານຈາກ ຟຟລ

ພາຍຫຼັງຈາກວັນສ້າງຕັ້ງບໍລິສັດ, ພະນັກງານຂອງ ຟຟລ ທີ່ດຳເນີນການຜະລິດ ກັບຊັບສິນທີ່ມີຢູ່ຈະຖືກໂອນຍ້າຍ ແລະ ເຮັດວຽກໃຫ້ບໍລິສັດ, ໃນວັນທີ 28 ກຸມພາ 2011 ພາຍໃຕ້ເງື່ອນໄຂຂໍ້ຕົກລົງຂອງການໂອນພະນັກງານຕາມສັນຍາທີ່ໄດ້ສ້າງຂຶ້ນໃໝ່ ແລະ ໜີ້ສິນທັງໝົດຈາກ ຟຟລ ໃຫ້ກັບພະນັກງານແມ່ນຖືກໂອນໃຫ້ກັບບໍລິສັດ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກບໍລິສັດ ແມ່ນຍັງຄືເກົ່າກັບທີ່ໄດ້ຮັບຈາກ ຟຟລ.

ສັນຍາຊື້ຮຸ້ນບໍລິສັດ ໄຟຟ້າ ນ້ຳລອງ ຈຳກັດ ("ສັນຍາ")

ໃນວັນທີ 26 ມີນາ 2018, ບໍລິສັດ ໄດ້ລົງນາມໃນສັນຍາຊື້ຮຸ້ນກັບ ຟຟລ ເພື່ອຊື້ຮຸ້ນໃນບໍລິສັດ ໄຟຟ້າ ນ້ຳລອງ ຈຳກັດ ໃນສັດສ່ວນ 20% ພິຈາລະນາເປັນເງິນສົດຈຳນວນ 650.000 ໂດລາ ຫຼື ທຽບເທົ່າ 5,49 ລ້ານກີບ.

16 ເຫດການທີ່ເກີດຂຶ້ນພາຍຫຼັງວັນທີ່ລາຍງານ

ການອອກຈຳໜ່າຍຮຸ້ນກູ້ ປະເພດ ບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ ໃນປະເທດໄທ

ວັນທີ 13 ກໍລະກົດ 2018, ບໍລິສັດໄດ້ອອກຮຸ້ນກູ້ ປະເພດ ບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ ອາຍຸ 3-15 ປີອັດຕາຄົງທີ່ ລວມມີ 6 ຊຸດ ຢູ່ທີ່ 1.000 ບາດ ມູນຄ່າໃບໜ້າຕໍ່ໜ່ວຍທັງໝົດ ຈຳນວນ 13,66 ລ້ານໜ່ວຍ ເຊິ່ງມີມູນຄ່າທັງໝົດ 13.660,4 ລ້ານບາດ (ທຽບເທົ່າ 3.532.989 ລ້ານກີບ). ຮຸ້ນກູ້ແມ່ນອອກໃນມູນຄ່າຮຸ້ນ ແລະ ບໍ່ມີສ່ວນຫຼຸດ ຫຼື ຄ່າເພີ່ມມູນຄ່າທີ່ເກີດຂຶ້ນຈາກການອອກຮຸ້ນກູ້ໄດ້ ອັດຕາດອກເບ້ຍໄດ້ລະບຸໄວ້ ຫຼື ຂຶ້ນກັບອັດຕາດອກເບ້ຍຄົງທີ່ ແລະ ມີຂັ້ນຕ້ຳແຕ່ 3,90% ເຖິງ 6,25% ຕໍ່ປີ. ບໍລິສັດໄດ້ ສະເໜີຂາຍຮຸ້ນກູ້ ໃນປະເທດໄທ ແກ່ນັກລົງທຶນລາຍໃຫຍ່ ແລະ ນັກລົງທຶນສະຖາບັນ ໂດຍວິທີສະເໜີຂາຍໃຫ້ແກ່ບຸກຄົນໃນວົງຈຳກັດ.

ການແຈ້ງເງິນປັນຜົນ

ໃນກອງປະຊຸມສະພາບໍລິຫານ ຊຶ່ງໄດ້ຈັດຂຶ້ນ ໃນວັນທີ 22 ສິງຫາ 2018 ສະພາບໍລິຫານໄດ້ລົງມັດຕິອະນຸມັດຈ່າຍເງິນປັນຜົນ ຂອງກຳໄລສຸດທິ ຫົກເດືອນຕົ້ນປີ ຈາກວັນທີ 1 ມັງກອນ ເຖິງ 30 ມິຖຸນາ 2018, ເປັນຈຳນວນ 110 ກີບຕໍ່ຮຸ້ນ ເປັນຈຳນວນເງິນລວມທັງໝົດ 184,72 ຕື້ກີບ ເງິນປັນຜົນນີ້ຈະຈ່າຍໃນເດືອນຕຸລາ 2018.

ບໍລິສັດ ໄຟຟ້າ ນ້ຳພຸນ ຈຳກັດ

ໃນວັນທີ 5 ກໍລະກົດ 2018, ບໍລິສັດໄດ້ເພີ່ມເງິນລົງທຶນໃນ ບໍລິສັດ ໄຟຟ້າ ນ້ຳພຸນ ຈຳກັດ, ຈຳນວນລວມທັງໝົດ 1.512 ລ້ານກີບ. ບໍລິສັດຍັງມີສ່ວນໄດ້ເສຍໃນບໍລິສັດຮຸ້ນສ່ວນຄືເກົ່າ.

ຈ່າຍເງິນເພີ່ມເຕີມສຳລັບສັນຍາໂອນຮຸ້ນ ("ສັນຍາ") ຂອງບໍລິສັດ ໄຟຟ້າ ໄຊຍະບູລີ ຈຳກັດ ແລະ ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ

ບໍລິສັດ ໄດ້ຈ່າຍເງິນເພີ່ມໃຫ້ ຟຟລ ເພື່ອຊື້ກິດຈະການພາຍໃຕ້ສັນຍາ ໃນລະຫວ່າງໄລຍະພາຍຫຼັງ ເປັນຈຳນວນ 114 ລ້ານໂດລາ, ຊຶ່ງຈຳນວນ 109 ລ້ານໂດລາ ໄດ້ຖືກຈ່າຍເປັນເງິນສົດ ແລະ 5 ລ້ານໂດລາ ແມ່ນໄປຫັກລ້າງກັບເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ.


17 ຂໍ້ມູນເພີ່ມເຕີມ

ກຸ່ມບໍລິສັດໄດ້ນຳສະເໜີໃບລາຍງານຜົນການດຳເນີນງານກາງປີໂດຍຫຍໍ້ທີ່ຍັງບໍ່ໄດ້ທົບທວນ ສຳລັບສາມເດືອນສິ້ນສຸດວັນທີ 30 ມິຖຸນາ 2018 ພາຍໃຕ້ບົດອະທິບາຍເອກະສານລາຍງານການເງິນກາງປີໂດຍຫຍໍ້. ເພື່ອປະຕິບັດຕາມລະບຽບໃນການລາຍງານ ແລະ ການເປີດເຜີຍຂໍ້ມູນ ທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບລາວ.

ສັງລວມໃບລາຍງານຜົນການດຳເນີນງານ (ທົບທວນຄືນ)
ສຳລັບໄລຍະເວລາ ສາມເດືອນສິ້ນສຸດວັນທີ 30 ມິຖຸນາ 2018


	ເອກະສານລາຍງານການເງິນແບບລວມ	**ເອກະສານລາຍງານການເງິນແບບແຍກ**
	30 ມິຖຸນາ 2018	30 ມິຖຸນາ 2018
	(ລ້ານກີບ)	
ຂາຍ	294.032	288.884
ຕົ້ນທຶນໃນການຂາຍ	(111.087)	(107.924)
ກຳໄລລວມ	182.945	180.960
ລາຍຮັບອື່ນໆ	9.852	9.852
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	(26.606)	(25.071)
ຂາດທຶນຈາກອັດຕາແລກປ່ຽນ	(114.357)	(108.225)
ສ່ວນແບ່ງກຳໄລຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	111.543	111.543
ກຳໄລຈາກການດຳເນີນງານ	**163.377**	**169.059**
ລາຍຈ່າຍທາງການເງິນ	(107.228)	(107.228)
ກຳໄລກ່ອນຈ່າຍອາກອນກຳໄລ	**56.149**	**61.831**
ລາຍຈ່າຍອາກອນກຳໄລ	-	-
ກຳໄລສຸດທິໃນງວດ	**56.149**	**61.831**

ผู้อำนวยการใหญ่



ลัดตะนา ปะทุมอัม

หัวหน้าพะแนกบันชี



ดาใบ หลวงไช

หัวหน้าพะแนกกวดสอบพายใน



มะนิวัน ยอดทองมี
